# ລາຍງານການເມືອງ
## ຂອງອົງຄະນະພັກແຂວງ ສະໄໝທີ IX
## ຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວແຂວງອັດຕະປື ຄັ້ງທີ X

**ຮຽນ:** ສະຫາຍ..........................................................................................

**ຮຽນ:** ຄະນະປະທານກອງປະຊຸມໃຫຍ່ ທີ່ນັບຖື
ບັນດາສະຫາຍແຂກທີ່ມີກຽດ, ຜູ້ແທນກອງປະຊຸມໃຫຍ່ ທີ່ນັບຖື ແລະ ຮັກແພງ !

ມື້ນີ້, ກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງອັດຕະປື ໄດ້ໄຂຂຶ້ນຢ່າງເປັນທາງການ, ໃນນາມຕາງໜ້າຄະນະບໍລິຫານງານພັກແຂວງ ສະໄໝທີ IX ຂ້າພະເຈົ້າຂໍສະເໜີຮ່າງລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວແຂວງ ປະກອບມີ **3** ພາກ ດັ່ງນີ້:

**ພາກທີ I:** ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງ ໃນ **5** ປີຜ່ານມາ ( 2011-2015 )

**ພາກທີ II:** ບັນດາທິດທາງໜ້າທີ່ຕົ້ນຕໍ ແລະ ຄາດໝາຍສູ້ຊົນໃນຊຸມປີຕໍ່ໜ້າ

**ພາກທີ III:** ເພີ່ມທະວີບົດບາດ ແລະ ຍົກສູງຄວາມສາມາດການນໍາພາຂອງພັກ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

## ພາກທີ I
## ສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງ ໃນ 5 ປີ ຜ່ານມາ ( 2011-2015 )

ຕະຫຼອດ 5 ປີ ແຫ່ງການນໍາພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງ ແມ່ນໃນເງື່ອນໄຂສະພາບຂອງສາກົນ ແລະ ພາກພື້ນ ທີ່ມີການຜັນແປຢ່າງສະຫລັບສັບຊ້ອນ, ມີດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ ທີ່ສ້າງເງື່ອນໄຂ ແລະ ຂໍ້ສະດວກພື້ນຖານໃຫ້ແກ່ການຮ່ວມມືເພື່ອການພັດທະນາ; ແຕ່ດ້ວຍຄວາມບຸກບືນຊີ້ນໍາ-ນໍາພາຂອງອົງຄະນະພັກແຂວງ ໄດ້ເຮັດໃຫ້ແຂວງມີຜົນສໍາເລັດແຕ່ລະດ້ານ ດັ່ງນີ້:

1. **ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ.**

ຄະນະພັກທຸກຂັ້ນ ໄດ້ເພີ່ມທະວີຄວາມຮັບຜິດຊອບຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ຮັບປະກັນເຮັດໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ ດ້ວຍການສ້າງທ່າສະໜາມສົງຄາມປະຊາຊົນ, ສ້າງບ້ານປ້ອມໝັ້ນສູ່ຮົບຕິດລຽນ; ສໍາເລັດການປັກຫລັກໝາຍຖີ່ຊາຍແດນ ລາວ-ຫວຽດນາມ ຮັບປະກັນໃຫ້ຊາຍແດນລະຫວ່າງປະເທດກາຍເປັນຊາຍແດນແຫ່ງສັນຕິພາບ, ມິດຕະພາບ ແລະ ມີຄວາມສະຫງົບປອດໄພ; ປັບປຸງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຕ່ຂັ້ນແຂວງລົງຮອດຂັ້ນບ້ານ, ປຸກລະດົມຊາວໜຸ່ມເຂົ້າເປັນທະຫານພັນທະ ແລະ ທະຫານອາຊີບໃນແຕ່ລະປີໄດ້ລື່ນຄາດໝາຍ; ກໍາລັງປະກອບອາວຸດໄດ້ຮັບການບໍາລຸງສ້າງໃຫ້ເຂັ້ມແຂງ, ເສີມຂະຫຍາຍໄດ້ທາດແທ້, ມູນເຊື້ອຂອງກອງທັບປະຊາຊົນລາວ; ປະຊາຊົນບັນດາເຜົ່າໄດ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຢ່າງເປັນເຈົ້າການ, ສ້າງສະພາບແວດລ້ອມອັນເອື້ອອໍານວຍຄວາມສະດວກໃຫ້ແກ່ການທໍາມາຫາກິນຂອງປະຊາຊົນ; ຜົນສໍາເລັດດັ່ງກ່າວມັນໄດ້ບົ່ງບອກເຖິງຄວາມສາມາດ ໃນການຊີ້ນໍາ-ນໍາພາຂອງພັກຕໍ່ກໍາລັງແຮງສູ້ຮົບຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສາມາດທັບມ້າງເປົ້າໝາຍ ແລະ ກຸ່ມຄົນບໍ່ດີທີ່ສວຍໂອກາດ, ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ: ການແກ້ໄຂບັນຫາຢາເສບຕິດ, ການລັກລອບຂຸດຄົ້ນຊັບພະຍາກອນທໍາມະຊາດແບບຊະຊາຍ, ຄ້າຂາຍເຖື່ອນ, ການເຂົ້າອອກເມືອງຜິດກົດໝາຍ, ແຮງງານຕ່າງດ້າວ ແລະ ອື່ນໆ.

2. **ຂົງເຂດເສດຖະກິດ.**

ການພັດທະນາເສດຖະກິດເປັນໜ້າທີ່ໃຈກາງ, ໄປຕາມທິດແບບຍືນຍົງກຳແໜ້ນສະພາວະຄວາມເປັນຈິງຂອງທ້ອງຖິ່ນ, ຫັນເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງສູນກາງພັກ, ມະຕິ IX ຂອງອົງຄະນະພັກແຂວງມາເປັນແຜນງານ, ໂຄງການຈຸດສຸມລະອຽດຂອງແຕ່ລະຂົງເຂດ; ໄດ້ປຸກລະດົມທຶນຈາກທຸກພາກເສດຖະກິດ, ປະຕິບັດນະໂຍບາຍສົ່ງເສີມທຸລະກິດຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫຍ່ ກັບການຫັນເປັນອຸດສະຫະກຳ ແລະ ທັນສະໄໝຕາມກົນໄກເສດຖະກິດຕະຫລາດທີ່ມີການຄຸ້ມຄອງດັດສົມຂອງລັດ ແລະ ການຊີ້ນຳ-ນຳພາຂອງພັກ ເຊິ່ງສະແດງອອກລວມຍອດຜະລິດຕະພັນພາຍໃນ ຫລື GDP ເພີ່ມຂຶ້ນສະເລ່ຍ 13,82% ສູງກວ່າຄາດໝາຍທີ່ວາງໄວ້, ມາຮອດປີ 2015 ບັນ ລຸໄດ້ 1.770 ໂດລາ/ຄົນ ທຽບໃສ່ປີ 2010 ເພີ່ມຂຶ້ນ 1.156 ໂດລາ ( ເພີ່ມຂຶ້ນສອງເທົ່າຕົວ ); ຊີວິດການເປັນຢູ່ຂອງປະ ຊາຊົນບັນດາເຜົ່າໃນທົ່ວແຂວງໄດ້ຮັບການປັບປຸງດີຂຶ້ນ.

- **ວຽກງານກະສິກຳ ແລະ ປ່າໄມ້:** ຊາວກະສິກອນໄດ້ລິເລີ່ມນຳໃຊ້ວັດຖຸເຕັກນິກ ເຂົ້າໃສ່ພື້ນຖານການຜະລິດຈາກແບບດັ້ງເດີມໄປສູ່ອັນໃໝ່, ການຜະລິດເຂົ້າສາມາດກຸ້ມກິນ ແລະ ມີສ່ວນແຮ່ໄວ້; ການປູກໄມ້ໃຫ້ໝາກ, ໄມ້ອຸດສະຫະກຳປະເພດຕ່າງໆ ແບບຄອບຄົວໄດ້ມີການຂະຫຍາຍຕົວ, ການປູກກາເຟເປັນສິນຄ້າຢູ່ເມືອງສະໜາມໄຊ ແລະ ເມືອງຊານໄຊ ໄດ້ກາຍເປັນພື້ນຖານລາຍຮັບໃໝ່ໃຫ້ແກ່ປະຊາຊົນ.

ຂະບວນການລ້ຽງສັດຂອງປະຊາຊົນໄດ້ຮັບການສົ່ງເສີມຢ່າງກ້ວາງຂວາງ ເຊັ່ນ: ຟາມລ້ຽງໝູ, ໄກ່ ແລະ ຟາມລ້ຽງງົວ; ການລົງທຶນຂອງບໍລິສັດເອກະຊົນພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ການປູກຕົ້ນໄມ້ອຸດສະຫະກຳ ແລະ ລ້ຽງສັດ ເປັນຕົ້ນ: ຢາງພາລາ, ປາມ, ໄມ້ວິກ, ອ້ອຍ; ການປູກຫຍ້າ ແລະ ລ້ຽງສັດໃຫຍ່ແບບເປັນຟາມ ກາຍເປັນໜໍ່ແໜງອຸດສະຫະກຳທັນສະໄໝ ທີ່ປະກອບສ່ວນອັນຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ປ່າໄມ້, ທີ່ດິນກະສິກຳໄດ້ຮັບການສຳຫລວດ, ຄຸ້ມຄອງ ແລະ ນຳໃຊ້ຢ່າງເປັນລະບົບ ເປັນຕົ້ນ: ການຖາງປ່າເຮັດໄຮ່ຂອງປະຊາຊົນໄດ້ຢຸດຕິ; ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ປ່າຟື້ນຟູ ລ້ວນແຕ່ໄດ້ຮັບການຈັດສັນ.

- **ວຽກງານອຸດສະຫະກຳ ແລະ ການຄ້າ:** ພື້ນຖານດ້ານອຸດສະຫະກຳໄດ້ມີການຂະຫຍາຍຕົວຢ່າງແຂງແຮງ ເປັນຕົ້ນ: ໂຮງງານນ້ຳຕານ, ໂຮງງານຜະລິດຢາງພາລາ, ນ້ຳປະປາ; ນອກນີ້ ຍັງມີການຜະລິດແບບຄອບຄົວ ເຊັ່ນ: ໂຮງງານນ້ຳດື່ມ, ນ້ຳກ້ອນ, ໂຮງສີເຂົ້າ, ເຕົາດິນຈີ່, ດິນບັອກ ແລະ ອື່ນໆ; ບັນດາໂຮງງານປຸງແຕ່ງໄມ້ ແລະ ເຄື່ອງເຟີນີເຈີ ໄດ້ຮັບການປັບປຸງດັດສົມເຂົ້າສູ່ລະບຽບການ; ການຜະລິດຫັດຖະກຳແບບຄອບຄົວໄດ້ຮັບການຊຸກຍູ້ສົ່ງເສີມເຊັ່ນ: ການຊ່ຽນ, ຄວັດ, ແກະສະຫຼັກ, ຈັກສານ ສາມາດນຳໄປວາງສະແດງ, ຈາໜ່າຍພາຍໃນ ແລະ ຕ່າງປະເທດ ເຊິ່ງໄດ້ຮັບລາງວັນລະດັບປະເທດ; ດ້ານການຄ້າ ແລະ ການບໍລິການ ໄດ້ຮັບການຊຸກຍູ້ສົ່ງເສີມ, ຄຸ້ມຄອງດີຂຶ້ນ, ໄດ້ເກີດມີຕະຫລາດກຸ່ມບ້ານ, ຕະຫລາດຊຸມຊົນ, ຕະຫລາດເທດສະບານເມືອງ ແລະ ແຂວງ, ປະຊາຊົນບັນດາເຜົ່າມີຄວາມຕື່ນຕົວຊື້-ຂາຍຫລາຍຂຶ້ນ. ພື້ນຖານໂຄງລ່າງດ້ານການບໍລິການໄດ້ຮັບການພັດທະນາຂະຫຍາຍຕົວຢ່າງວ່ອງໄວ ເປັນຕົ້ນ: ໂຮງແຮມ, ເຮືອນພັກ, ຮ້ານກິນດື່ມ, ຮ້ານບັນເທິງ, ບັນດາຫົວໜ່ວຍທະນາຄານ ແລະ ຫົວໜ່ວຍແລກປ່ຽນເງິນຕາ.

- **ວຽກງານໂຍທາທິການ ແລະ ຂົນສົ່ງ:** ໄດ້ສຸມໃສ່ກໍ່ສ້າງ ແລະ ຍົກລະດັບເສັ້ນທາງປູຢາງ, ທາງດິນແດງ, ແຕ່ແຂວງຫາເມືອງ, ເມືອງຫາບ້ານ ແລະ ແຕ່ບ້ານຫາບ້ານ ເຊັ່ນ: ຍົກລະດັບເສັ້ນທາງໃນຕົວເມືອງສາມັກຄີໄຊເປັນລະບົບຄົບຊຸດ, ປູຢາງເສັ້ນທາງຢູ່ແຕ່ລະເມືອງ, ສຳເລັດການກໍ່ສ້າງຂົວ ແລະ ເສັ້ນທາງດ່ານສາກົນພູເກືອ, ຂົວເຊກະໜານ 2 ແລະ ສຳເລັດການກໍ່ສ້າງສະໜາມບິນ, ທະລຸແລວທາງຊາຍແດນ ລາວ-ຫວຽດນາມ ແລະ ເສັ້ນທາງ 18 A ແຕ່ເມືອງສະໜາມໄຊ ຮອດເຊຄຳພໍ. ລະບົບການກໍ່ສ້າງເຄຫາສະຖານ ແລະ ການຂົນສົ່ງກໍ່ໄດ້ຮັບການປັບປຸງດີຂຶ້ນ.

- **ວຽກງານໄປສະນີ, ໂທລະຄົມ ແລະ ການສື່ສານ:** ໄດ້ຄຸ້ມຄອງໄປສະນີ ແລະ ການບໍລິການໂທລະຄົມມານາຄົມ, ການນຳໃຊ້ລະບົບໄອທີ, ລະບົບໂທລະສັບ, ອິນເຕີແນັດ ແລະ ການນຳໃຊ້ລະບົບເຄືອຄາຍການບໍລິການໂທລະຄົມມານາຄົມ ກວມເອົາທຸກພື້ນທີ່ຂອງບ້ານ.

- **ວຽກງານພະລັງງານ ແລະ ບໍ່ແຮ່:** ໄດ້ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກໃນການພັດທະນາເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່, ກາງ, ນ້ອຍພວມໄດ້ຮັບການຈັດຕັ້ງປະຕິບັດ ເຊັ່ນ: ເຂື່ອນໄຟຟ້າເຊກະໜານຊານໄຊ, ເຊກະໜານ 1, ນ້ຳກົງ 1, 2, 3, ເຊປຽນ-ເຊນ້ຳນ້ອຍ ແລະ ແຫ່ງອື່ນໆ; ໄດ້ຂະຫຍາຍຕາຂ່າຍໄຟຟ້າແຮງກາງ, ແຮງຕ່ຳ ແລະ ໄຟຟ້າ

ແສງຕາເວັນ ໄປສູ່ເຂດຈຸດສຸມ, ຊຸມຊົນ, ເຂດຊົນນະບົດຫ່າງໄກສອກຫຼີກ ກວມເອົາ 79% ຂອງຄົວເຮືອນ ແລະ 85% ຂອງຈຳນວນບ້ານ. ໃນນີ້, ມີ 2 ເມືອງ ( ເມືອງສາມັກຄີໄຊ ແລະ ໄຊເສດຖາ ) ໄດ້ນຳໃຊ້ໄຟຟ້າ 100%. ເອົາ ໃຈໃສ່ຄຸ້ມຄອງການສຳຫລວດ ແລະ ຂຸດຄົ້ນແຮ່ທາດຕ່າງໆ ທີ່ລັດຖະບານອະນຸມັດ; ເດັດດ່ຽວແກ້ໄຂການຂຸດຄົ້ນແຮ່ທາດຊະຊາຍ ເຮັດໃຫ້ການລັກລອບຢຸດຕິໂດຍພື້ນຖານ.

**- ວຽກງານການເງິນ:** ໄດ້ສຸມໃສ່ ສ້າງແຫຼ່ງລາຍຮັບ ແລະ ຂຸດຄົ້ນເກັບລາຍຮັບເຂົ້າງົບປະມານລື່ນຄາດໝາຍໃນແຕ່ລະປີ ສາມາດປະຕິບັດລາຍຮັບ-ລາຍຈ່າຍງົບປະມານ ໂດຍສະເພາະແມ່ນເງິນເດືອນ, ອຸດໜູນ, ບໍລິຫານ, ສົ່ງເສີມວິຊາການ, ການລົງທຶນ ແລະ ແກ້ໄຂໜີ້ສິນໃນແຜນ ແລະ ນອກແຜນ.

**- ວຽກທະນາຄານ:** ບັນດາທະນາຄານໄດ້ປະຕິບັດບົດບາດໃນການບໍລິການໄດ້ຢ່າງຄ່ອງຕົວ ເປັນຕົ້ນ: ການປ່ອຍສິນເຊື່ອຊຸກຍູ້ການຜະລິດທຸລະກິດຂອງປະຊາຊົນ, ການສ້າງເງື່ອນໄຂໃຫ້ປະຊາຊົນເຂົ້າເຖິງການບໍລິການເງິນຝາກ, ເງິນກູ້, ການສຳລະສະສາງໂຄງການຕ່າງໆ, ຈັດຊື້ຈັດຈ້າງ ແລະ ເງິນເດືອນໂດຍຜ່ານລະບົບທະນາຄານ.

**- ວຽກງານຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ** ໄດ້ເອົາໃຈໃສ່ຄຸ້ມຄອງເຂົ້າສູ່ລະບຽບກົດໝາຍດີຂຶ້ນ, ແກ້ໄຂຂໍ້ຂັດແຍ່ງທີ່ດິນລະຫວ່າງຜູ້ປະກອບການກັບປະຊາຊົນ ໃຫ້ມີຄວາມສະຫງົບ; ຄົ້ນຄວ້າວາງແຜນຈັດສັນດິນປະເພດຕ່າງໆ, ສຳຫລວດ ແລະ ອະນຸລັກຊີວະນາໆພັນ, ສ້າງຕັ້ງຖານປ້ອງກັນປ່າສະຫງວນ, ປ່າປ້ອງກັນ, ປ່າຟື້ນຟູ, ໂຄສະນາເຜີຍແຜ່ປູກຈິດສຳນຶກໃຫ້ປະຊາຊົນມີສ່ວນຮ່ວມ, ສະກັດກັ້ນການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດ, ຕິດຕາມກວດກາຄຸນນະພາບນໍ້າ ແລະ ປັບປຸງຄຸນນະພາບສະຖານີອຸຕຸນິຍົມ-ອຸທົກກະສາດ.

**- ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ:** ໄດ້ນຳໃຊ້ ແລະ ຜັນຂະຫຍາຍຜົນສຳເລັດທາງດ້ານວິທະຍາສາດເຕັກໂນໂລຊີ ເຂົ້າໃນຂົງເຂດວຽກງານຕ່າງໆຫລາຍຂຶ້ນ ເຊັ່ນ: ການນຳໃຊ້ລະບົບຄອມພິວເຕີ, ຫົວໜ່ວຍມາດຕະຖານວັດແທກນໍ້າໜັກ, ຫົວສີດປໍ້ານໍ້າມັນ, ກົງເຕີໄຟຟ້າ, ກົງເຕີນໍ້າປະປາ ແລະ ເຕັກນິກກະສິກຳ-ປ່າໄມ້.

3. **ຂົງເຂດວັດທະນະທຳ-ສັງຄົມ.**

**- ວຽກສຶກສາທິການ ແລະ ກິລາ:** ເອົາໃສ່ການປັບປຸງຄຸນນະພາບການສຶກສາ ແລະ ຂະຫຍາຍຕາໜ່າງການສຶກສາໄປສູ່ຊົນນະບົດຢ່າງທົ່ວເຖິງ, ໂຮງຮຽນຊັ້ນປະຖົມກວມເອົາ 100% ຂອງຈຳນວນບ້ານ, ໂຮງຮຽນຊັ້ນມັດທະຍົມກໍ່ໄດ້ເພີ່ມຂຶ້ນ; ສາມາດປະກາດຈົບປະຖົມບຳລຸງໃນທົ່ວແຂວງ, ມີສອງເມືອງຈົບມັດທະຍົມຕົ້ນບຳລຸງ (ເມືອງສາມັກຄີໄຊ ແລະ ໄຊເສດຖາ); ອັດຕາເຂົ້າຮຽນສຸດທິຂອງເດັກຊັ້ນປະຖົມບັນລຸໄດ້ 98.05%; ໄດ້ມີນັກຮຽນເກັ່ງລະດັບປະເທດໃນວິຊາພາສາລາວວັນນະຄະດີ; ໄດ້ກໍ່ສ້າງໂຮງຮຽນເຕັກນິກວິຊາຊີບເປັນພື້ນຖານໃນການພັດທະນາຊັບພະກອນມະນຸດ; ແກ້ໄຂສະພາບການຂາດເຂີນຄູ, ບຳລຸງຍົກລະດັບທາງດ້ານວິຊາສະເພາະ, ຄຸນທາດການເມືອງ, ຄຸນສົມບັດ, ຈັນຍາທຳ, ຈັນຍາບັນ ໃຫ້ແກ່ຄູອາຈານຢ່າງຕໍ່ເນື່ອງ.

ໄດ້ພັດທະນາດ້ານພື້ນຖານໂຄງລ່າງຮັບໃຊ້ກິລາແຕ່ລະປະເພດ, ບຳລຸງຝຶກຊ້ອມຢ່າງເປັນລະບົບ; ສົ່ງເສີມຂະບວນກິລາຢູ່ບັນດາໂຮງຮຽນ, ຊຸມຊົນ ຢ່າງເປັນຂະບວນຟົດຟື້ນ, ສ້າງນັກກິລາແຕ່ລະປະເພດຕາມພອນສະຫວັນ ສາມາດໄປແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດ ສາມາດຍາດໄດ້ຫລຽນຄຳ, ຫລຽນເງິນ, ຫລຽນທອງ ຈຳນວນໜຶ່ງ ຊຶ່ງໄດ້ສ້າງໃຫ້ກຽດ ແລະ ສັກສີຂອງແຂວງມີບາດກ້າວໃໝ່.

**- ວຽກງານສາທາລະນະສຸກ:** ໄດ້ສຳເລັດກໍ່ສ້າງ ແລະ ນຳໃຊ້ໂຮງໝໍແຂວງຫຼັງໃໝ່, ສະໜອງອຸປະກອນການແພດໃຫ້ແກ່ໂຮງໝໍແຂວງ, ເມືອງ ແລະ ສຸກສາລາ; ຂະຫຍາຍຕາໜ່າງສາທາລະນະສຸກໄປເຖິງຊົນນະບົດເຂດຫ່າງໄກສອກຫລີກ; ໂຄສະນາສຸຂະສຶກສາ ແລະ ໂພສະນາການໃຫ້ແກ່ປະຊາຊົນຮັບຮູ້ເຂົ້າໃຈກ່ຽວກັບການຮັກສາສຸຂະພາບຂັ້ນພື້ນຖານ, ໄດ້ປະຕິບັດນະໂຍບາຍການປິ່ນປົວເສຍຄ່າ-ບໍ່ເສຍຄ່າ, ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ຮັບການບໍລິການດ້ານສຸຂະພາບ, ສັກຢາກັນພະຍາດໄດ້ຢ່າງທົ່ວເຖິງ, ແກ້ໄຂໂລກລະບາດຕ່າງໆໄດ້ຢ່າງທັນການ; ອັດຕາການຊົມໃຊ້ວິດຖ່າຍ ແລະ ນໍ້າສະອາດເພີ້ມຂຶ້ນ; ອັດຕາການຕາຍຂອງແມ່ ແລະ ເດັກຫຼຸດລົງ, ການສ້າງບ້ານແບບຢ່າງສາທາລະນະສຸກໄດ້ເພີ່ມຂຶ້ນ; ອາຍຸຍືນສະເລ່ຍເພີ່ມຂຶ້ນຈາກ 58 ປີ (ປີ 2010) ເປັນ 63,5 ປີ ທຽບໃສ່ແຜນການລື່ນ 2,5 ປີ ຫລືເທົ່າກັບ 4%.

**- ວຽກງານກາແດງ** ໄດ້ເຄື່ອນໄຫວປຸກລະດົມທົ່ວສັງຄົມ ປະກອບສ່ວນທຶນຮອນ, ວັດຖຸປັດໃຈ, ບັນເທົາທຸກ ຜູ້ທຸກຍາກຂາດເຂີນ, ຜູ້ປະສົບເຄາະຮ້າຍຈາກໄພພິບັດ, ປຸກລະດົມການບໍລິຈາກເລືອດທຽບໃສ່ແຜນການໄດ້ລື່ນຄາດ ໝາຍ.

**- ວຽກຖະແຫລ່ງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ:** ໄດ້ມີການປັບປຸງຍົກລະດັບການສະໜອງຂໍ້ມູນຂ່າວ ສານໃຫ້ປະຊາຊົນຢ່າງທົ່ວເຖິງ ດ້ວຍການໂຄສະນາຜ່ານລະບົບສື່ຕ່າງໆ ເຊັ່ນ: ໂທລະພາບ, ວິທະຍຸ, ໂທລະໂຄ່ງ, ວາລະ ສານ, ໜັງສືພິມ ແລະ ອື່ນໆ; ວັດທະນະທໍາ ແລະ ຮີດຄອງປະເພນີທີ່ເປັນມໍລະດົກອັນດີງາມທີ່ເປັນເອກະລັກຂອງ ແຂວງ ໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຢ່າງຕັ້ງໜ້າ ເປັນຕົ້ນ: ການບູລະນະປະຕິສັງຂອນວັດທາດພະ ເຈົ້າໄຊເສດຖາທິລາດ, ສຳຫລວດຊອກຄົ້ນຂຸ້ນບັນຊີວັດຖຸບູຮານ ແລະ ປັບປຸງແຫຼ່ງທ່ອງທ່ຽວປະຫວັດສາດ, ທໍາມະ ຊາດ ແລະ ວັດທະນະທໍາ ກາຍເປັນສິ່ງຈູງໃຈນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເພີ່ມຂຶ້ນ; ສ້າງບ້ານວັດທະ ນະທໍາໄດ້ 61 ບ້ານ ທຽບໃສ່ປີ 2010 ເພີ່ມຂຶ້ນ 45 ບ້ານ.

**- ວຽກແຮງງານ ແລະ ສະຫວັດດີການສັງຄົມ:** ໄດ້ພັດທະນາ, ກວດກາ, ຄຸ້ມຄອງ, ຈັດສັນ ແລະ ປົກປ້ອງແຮງ ງານທັງພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ; ພັດທະນາສີມືແຮງງານ, ປະຕິບັດນະໂຍບາຍໃຫ້ຜູ້ທີ່ມີຄຸນ ງາມຄວາມດີຕໍ່ປະເທດຊາດ ເປັນເງິນທັງໝົດ 8,9 ຕື້ກ່າວກີບ, ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ຜູ້ເສຍອົງຄະ, ຜູ້ດ້ອຍ ໂອກາດດ້ວຍຫລາຍລະດັບ ທີ່ສອດຄ່ອງຕາມນະໂຍບາຍລວມ ແລະ ຄວາມສາມາດຕົວຈິງຂອງທ້ອງຖິ່ນ; ນອກນີ້ ກໍ່ໄດ້ ເປັນເຈົ້າການແກ້ໄຂຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດຈາກທໍາມະຊາດໄດ້ເປັນຢ່າງດີ.

**4. ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ການທົດລອງສາມສ້າງ.**

ປຸກລະດົມກໍາລັງແຮງສັງລວມໃນທົ່ວສັງຄົມ, ສ້າງສະຕິຕື່ນຕົວເປັນເຈົ້າເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມຢ່າງຕັ້ງໜ້າ; ຮາກຖານບ້ານມີຄວາມສະຫງົບໂດຍພື້ນຖານ; ໄດ້ສໍາເລັດການລົງປັບປຸງໃນການກໍ່ສ້າງຮາກຖານ ການເມືອງພັດທະນາຊົນນະບົດຮອບດ້ານ; ຈຸດສຸມໃດມີຄວາມສະດວກໂລ່ງລຽນໃນການຊີ້ນໍາໆພາ ໄດ້ຫຍຸບຄະນະພັກ ຮາກຖານມາເປັນການຊີ້ນໍາໆພາຂອງຄະນະພັກເມືອງ, ໃນເມື່ອກ່ອນມີ 26 ກຸ່ມບ້ານ ຍັງເຫລືອ 7 ກຸ່ມບ້ານ ຢູ່ 2 ເມືອງ (ເມືອງຊານໄຊ 3 ກຸ່ມບ້ານ ແລະ ເມືອງສະໜາມໄຊ 4 ກຸ່ມບ້ານ), ໄດ້ຄົ້ນຄວ້າກໍານົດວິໄສທັດຄືນໃໝ່ ຕິດພັນກັບການ ສ້າງບ້ານພັດທະນາ, ສຸມໃສ່ແກ້ໄຂຄວາມທຸກຍາກຂອງທ້ອງຖິ່ນມີ 3 ຈຸດສຸມ ທີ່ນອນໃນ 54 ຈຸດສຸມຂອງລັດຖະບານ ແລະ ມີ 11 ຈຸດສຸມ ຂອງການຈັດສັນພູມລໍາເນົາອາຊີບໝັ້ນທ່ຽງ, ເກີດມີຄອບຄົວຕົວແບບດ້ານຕ່າງໆ; ເກີດມີບ້ານພັດ ທະນາ, ຄອບຄົວພັດທະນາ; ໄດ້ເຮັດໃຫ້ຄອບຄົວທຸກຍາກຫລຸດລົງ, ຊີວິການເປັນຢູ່ຂອງປະຊາຊົນບັນດາເຜົ່າມີຊີວິດ ການເປັນຢູ່ດີຂຶ້ນ.

ວຽກທົດລອງ 3 ສ້າງ: ໄດ້ຈັດຕັ້ງຄົ້ນຄວ້າເຊື່ອມຊຶມ ແລະ ຫັນເປັນມະຕິ, ຄໍາສັ່ງ, ລະບຽບການລະອຽດ ເພື່ອ ຈັດຕັ້ງປະຕິບັດ; ໄດ້ແຕ່ງຕັ້ງຄະນະຮັບຜິດຊີ້ນໍາຂັ້ນແຂວງ, ຂັ້ນເມືອງ, ກໍານົດເອົາ 3 ເມືອງ ແລະ 6 ບ້ານ ເປັນບ່ອນ ເຮັດທົດລອງ; ໄດ້ມອບຄວາມຮັບຜິດຊອບແບ່ງຂັ້ນຄຸ້ມຄອງໃຫ້ເມືອງ, ບ້ານ; ຈັດສັນຖານລາຍຮັບ, ຫັນພະນັກງານແຕ່ ລະຂະແໜງການລົງສູ່ຈຸດສຸມທົດລອງສາມສ້າງ; ຜ່ານການຈັດຕັ້ງປະຕິບັດເຮັດໃຫ້ຮາກຖານການເມືອງຂັ້ນບ້ານໄດ້ຮັບ ການປັບປຸງດີຂຶ້ນ, ພື້ນຖານໂຄງລ່າງໄດ້ຮັບການປັບປຸງບູລະນະ ເຊິ່ງເປັນເງື່ອນໄຂເອື້ອອໍານວຍຄວາມສະດວກໃຫ້ປະຊາ ຊົນໄດ້ທໍາມາຫາກິນແກ້ໄຂຊີວິດການເປັນຢູ່ນັບມື້ນັບດີຂຶ້ນ.

**5. ວຽກງານປັບປຸງອົງການບໍລິຫານລັດຂັ້ນແຂວງ**

ສຸມໃສ່ປັບປຸງອົງການບໍລິຫານລັດຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ດ້ວຍ ການປັບປຸງກົນໄກແບບແຜນວິທີເຮັດວຽກເຂົ້າສູ່ລະບຽບຫລັກການ, ຕີຖອຍໄດ້ສິ່ງຫຍໍ້ທໍ້ທີ່ເປັນການກົດໜ່ວງທວງດຶງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ; ຖັນແຖວພະນັກງານ-ລັດຖະກອນ ໄດ້ຮັບການປັບປຸງທາງດ້ານການຈັດຕັ້ງ ແລະ ຍົກລະດັບທາງດ້ານວິຊາສະເພາະທີ່ແນນອນ.

**- ສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 17:** ໄດ້ເຮັດພາລະບົດບາດເປັນຕົວແທນແຫ່ງສິດອໍານາດ ແລະ ຜົນ ປະໂຫຍດສູງສຸດຂອງປະຊາຊົນບັນດາເຜົ່າ, ເປັນເຈົ້າການນໍາເອົາແນວທາງນະໂຍບາຍຂອງພັກ, ມະຕິກອງປະຊຸມສະພາ

ແຫ່ງຊາດລົງສູ່ປະຊາຊົນ, ປະຕິບັດບົດບາດຕິດຕາມກວດກາການເຄື່ອນໄຫວວຽກງານບໍລິຫານ ແລະ ວຽກງານຕຸລາການ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ; ຊຸກຍູ້ ແລະ ແກ້ໄຂຄຳຮ້ອງທຸກ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ.

- **ວຽກງານພາຍໃນ:** ເປັນເຈົ້າການປະຕິບັດບົດບາດເປັນເສນາທິການໃນການຄົ້ນຄ້ວາໂຄງປະກອບກົງຈັກ, ການຈັດຕັ້ງ ແລະ ບຸກຄະລະກອນໃນວຽກງານບໍລິຫານລັດ, ປົກປັກຮັກສາ ແລະ ແກ້ໄຂຂໍ້ຂັດແຍ່ງເຂດເຊື່ອມຕໍ່ ລະຫວ່າງບ້ານຕໍ່ບ້ານ, ເມືອງຕໍ່ເມືອງ ແລະ ລະຫວ່າງແຂວງກັບແຂວງມີສະຫງົບ; ໄດ້ຝຶກອົບຮົມພາລະບົດບາດສິດ ແລະ ໜ້າທີ່, ແບບແຜນວິທີເຮັດວຽກໃຫ້ອຳນາດການປົກຄອງແຕ່ລະຂັ້ນ; ໄດ້ຄຸ້ມຄອງ ແລະ ສອບເສັງຄັດເລືອກເອົາລັດຖະກອນ; ໄດ້ຄົ້ນຄວ້ານຳສະເໜີການສ້າງຕັ້ງພະແນກຂອງແຂວງ, ຫ້ອງການຂອງເມືອງຈຳນວນໜຶ່ງຕາມການປັບປຸງກົງຈັກລັດຂັ້ນສູນກາງ ພ້ອມທັງຈັດວາງ ແລະ ຊັບຊ້ອນພະນັກງານເຂົ້າໃສ່ຕໍາແໜ່ງງານ.

- **ວຽກງານຍຸຕິທຳ:** ໄດ້ສຸມໃສ່ໂຄສະນາຍົກລະດັບທາງດ້ານກົດໝາຍໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນແຂວງ, ເມືອງ, ອຳນາດການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າຢ່າງຕັ້ງໜ້າ; ພ້ອມກັນນັ້ນ ກໍ່ໄດ້ເອົາໃຈໃສ່ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນແຍ່ງຂັ້ນບ້ານເຮັດໃຫ້ຄອບຄົວ ແລະ ບ້ານປອດຄະດີ ເພີ່ມຂຶ້ນໃນແຕ່ລະປີ; ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ ແລະ ການບໍລິການທາງດ້ານກົດໝາຍຢ່າງທົ່ວເຖິງ ທັງຮັບປະກັນໃຫ້ແກ່ການແກ້ໄຂໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆຢູ່ຂັ້ນບ້ານ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ການຢັ້ງຢືນຄວາມຖືກຕ້ອງຂອງສັນຍາປະເພດຕ່າງໆ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ມີປະສິດທິຜົນດີຂຶ້ນ.

- **ວຽກງານອົງການໄອຍະການປະຊາຊົນ:** ໄດ້ເອົາໃຈໃສ່ປັບປຸງບູລະນະກົງຈັກການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ, ປະຕິບັດບົດບາດການສັ່ງຟ້ອງຂຶ້ນສານມີຄວາມຖືກຕ້ອງ, ຊັດເຈນກວ່າເກົ່າ; ຕິດຕາມກວດກາການຈັດຕັ້ງປະຕິບັດການຕັດສິນຄະດີ, ການປະຕິບັດຄຳຕັດສິນຂອງສານ; ກວດກາການແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກຂອງປະຊາຊົນພົນລະເມືອງຕໍ່ບຸກຄົນ, ນິຕິບຸກຄົນທີ່ລະເມີດສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າ.

- **ວຽກງານສານປະຊາຊົນ:** ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຕັດສິນຄະດີ ຕາມລະບຽບກົດໝາຍມີຄວາມວ່ອງໄວ, ຖືກຕ້ອງຍຸຕິທຳ ແລະ ໂປ່ງໃສ, ສາມາດປົກປ້ອງໄດ້ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ; ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ.

**6. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.**

- **ອົງການແນວລາວສ້າງຊາດ:** ໄດ້ເອົາໃຈໃສ່ໂຄສະນາສຶກສາອົບຮົມ, ປຸກລະດົມເຕົ້າໂຮມຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ ເປັນປຶກແຜ່ນແໜ້ນໜາ, ມີແນວຄິດ ແລະ ການກະທຳຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ, ເສີມຂະຫຍາຍໄດ້ມູນເຊື້ອຮັກຊາດ, ຮັກບ້ານເກີດເມືອງນອນ, ຍົກສູງຄວາມເປັນເຈົ້າຕົນເອງ, ເພິ່ງຕົນເອງກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເອົາໃຈໃສ່ສຶກສາອົບຮົມລູກຫຼານເປັນເຈົ້າການປົກປັກຮັກສາຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງທ້ອງຖິ່ນ; ຄຸ້ມຄອງສາສະໜາ, ວັດວາອາຮາມ ແລະ ພະສົງສຳມະເນນ ໃຫ້ເຄື່ອນໄຫວຕາມລັດຖະທຳມະນູນ ແຫ່ງ ສປປ ລາວ.

- **ສະຫະພັນນັກຮົບເກົ່າ:** ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ເຄື່ອນໄຫວປະຕິບັດພາລະບົດບາດ ແລະ ໜ້າທີ່, ເຕົ້າໂຮມຄວາມສາມັກຄີບັນດາພະນັກງານນັກຮົບປະຕິວັດໄດ້ເປັນຢ່າງດີ ເປັນຕົ້ນ: ການຫັນລົງຮາກຖານປັບປຸງອົງການຈັດຕັ້ງ, ເກັບກຳສະຖິຕິ ແລະ ຄົ້ນຄວ້ານຳສະເໜີການປະຕິບັດນະໂຍບາຍ.

- **ສະຫະພັນກຳມະບານ:** ໄດ້ເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນ, ໂຄສະນາເຜີຍແຜ່ນະໂຍບາຍ ແລະ ກົດໝາຍ, ປະຕິບັດຄຳຂວັນ 2 ດີ 5 ເປັນເຈົ້າ, ບັນດາຫົວໜ່ວຍຮາກຖານກຳມະບານຢູ່ຫົວໜ່ວຍວິສະຫະກິດຕ່າງໆໄດ້ຮັບການປັບປຸງ ແລະ ເຄື່ອນໄຫວຕາມພາລະບົດຢ່າງຕັ້ງໜ້າ; ເປັນເຈົ້າການໄກ່ເກຍ, ແກ້ໄຂຂໍ້ຂັດແຍງການນຳໃຊ້ແຮງງານ, ໄດ້ນຳເອົາຜົນປະໂຫຍດມາໃຫ້ຊາວຜູ້ອອກແຮງງານ.

- **ຊາວໜຸ່ມ-ເຍົາວະຊົນ:** ໄດ້ສຶກສາອົບຮົມຖັນແຖວຊາວໜຸ່ມ-ເຍົາວະຊົນ ປູກຈິດສຳນຶກນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກການອອກແຮງງານ, ເປັນຜູ້ສືບທອດມູນເຊື້ອອັນດີງາມຂອງຊາດ, ຂອງພັກ; ໄດ້ປັບປຸງອົງ

ການຈັດຕັ້ງຊາວໜຸ່ມ ຢູ່ຕາມຮາກຖານຕ່າງໆ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ປະຕິບັດຄຳຂວັນ 4 ບຸກ ຢ່າງເປັນຂະບວນຟົດຟື້ນ.

**- ສະຫະພັນແມ່ຍິງ** ໄດ້ເອົາໃຈໃສ່ສຶກສາອົບຮົມແນວທາງນະໂຍບາຍຂອງພັກ-ລັດ ຕິດພັນກັບຄຳຂັວນ 3 ດີ ໃຫ້ແກ່ແມ່ຍິງບັນດາເຜົ່າໃນທົ່ວແຂວງ ມີຄວາມຮັບຮູ້, ຕື່ນຕົວປະກອບສ່ວນເຂົ້າໃນການພັດທະເສດຖະກິດ-ສັງຄົມຂອງແຂວງ; ລະບົບການຈັດຕັ້ງຂອງສະຫະພັນແມ່ຍິງແຕ່ລະຂັ້ນໄດ້ຮັບການປັບປຸງທາງດ້ານຈຳນວນ ແລະ ຄຸນນະພາບ, ບົດບາດຍິງ-ຊາຍ ໄດ້ຮັບການປະຕິບັດ, ທຽບໃສ່ສະໄໝຜ່ານມາ ແມ່ຍິງປະກອບເປັນການນຳຢູ່ຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ ດ້ວຍຈຳນວນເພີ່ມຂຶ້ນ; ອັນພົ້ນເດັ່ນ ໄດ້ມີກອງທຶນໝູນວຽນ, ກອງທຶນປະກັນສັງຄົມ ເພື່ອເປັນທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

ໄດ້ຜັນຂະຫຍາຍແຜນດຳເນີນງານແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງລົງສູ່ຮາກຖານ, ເຜີຍແຜ່ຍຸດທະສາດລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ສຸຂະພາບຂອງແມ່ ແລະ ເດັກໄດ້ຮັບການເອົາໃຈໃສ່, ຮີດຄອງປະເພນີເກົ່າແກ່ຫລ້າຫລັງ ໄດ້ຖືກແກ້ໄຂໃຫ້ໝົດໄປ ເປັນຕົ້ນ: ການເກີດລູກຢູ່ປ່າຂອງແມ່ຍິງບາງເຜົ່າແມ່ນບໍ່ມີ; ໄດ້ສຳເລັດການປັບປຸງລະບົບຂໍ້ມູນຂ່າວສານ ແລະ ສະຖິຕິແຍກເພດ.

7. **ວຽກງານພົວພັນຮ່ວມມືກັບຕ່າງປະເທດ.**

ໃນຊຸມປີຜ່ານມາ ພວກເຮົາຍັງຮັກສາໄດ້ບັນຍາກາດໃນການພົວພັນຮ່ວມມືກັບຕ່າງປະເທດ ຢ່າງສະເໝີຕົ້ນສະເໝີປາຍ ອັນໄດ້ນຳເອົາທຶນຮອນເຂົ້າມາປະກອບສ່ວນພັດທະນາແຂວງມີບາດກ້າວຂະຫຍາຍຕົວໃໝ່; ພິເສດໄດ້ເປັນເຈົ້າການຮ່ວມມືຮອບດ້ານກັບແຂວງແຮກສ໋ຽວ ແລະ ບັນດາແຂວງອື່ນໆຂອງ ສສ ຫວຽດນາມ ເຂົ້າສູ່ລ່ວງເລິກທີ່ມີຄຸນນະພາບ, ເຊິ່ງມີຜົນສຳເລັດຫລາຍດ້ານ ເປັນຕົ້ນ: ການແລກປ່ຽນຄະນະຜູ້ແທນຂັ້ນສູງຂອງແຂວງ, ການຮ່ວມມືວຽກງານຊາຍແດນ, ການຊອກຄົ້ນອັດຖິທະຫານອາສາສະໝັກ ຫວຽດນາມ, ການຊ່ວຍເຫລືອການພັດທະນາຊັບພະຍາກອນມະນຸດ, ແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາພື້ນຖານໂຄງລ່າງຈຳນວນໜຶ່ງ, ການລົງທຶນຂະໜາດໃຫຍ່, ການສ້າງສະໜາມບິນ, ປູກຢາງພາລາ, ປູກອ້ອຍ, ປູກຫຍ້າ, ລ້ຽງງົວ ແລະ ອື່ນໆ; ນອກນີ້ ຍັງໄດ້ພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ບັນດາແຂວງຂອງປະເທດເພື່ອນມິດໃກ້ຄຽງ; ອັນທີ່ພົ້ນເດັ່ນ ໄດ້ສຳເລັດການຈັດກອງປະຊຸມປະຈຳປີຂອງຄະນະປະສານງານພັດທະນາສາມຫລ່ຽມ ລາວ-ກຳປູເຈຍ-ຫວຽດນາມ ( CLV ).

8. **ເພີ່ມທະວີບົດບາດ ແລະ ຍົກສູງຄວາມສາມາດການນຳພາຂອງພັກ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.**

ຄະນະພັກແຕ່ລະຂັ້ນໄດ້ຖືສຳຄັນການປັບປຸງກໍ່ສ້າງພັກ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງແນວຄິດ, ການຈັດຕັ້ງ, ແບບແຜນວິທີນຳພາ ເຊິ່ງສະແດງອອກ ດັ່ງນີ້:

**- ການກໍ່ສ້າງ ແລະ ປັບປຸງພັກ:** ຖືເອົາວຽກງານການເມືອງ-ແນວຄິດເປັນກົກ, ໄດ້ຈັດຕັ້ງຄົ້ນຄວ້າເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ຂໍ້ກຳນົດຕ່າງໆ; ໄດ້ປັບປຸງເນື້ອໃນ ແລະ ວິທີການສຶກສາອົບຮົມ ໃຫ້ແທດເໝາະກັບໜ້າທີ່ການເມືອງ ແລະ ສະພາບການໃນແຕ່ລະໄລຍະຂອງແຂວງ; ຈັດຕັ້ງການປະຖະກະຖາວັນສຳຄັນຕ່າງໆ, ເປີດປັ້ນດຳເນີນຊີວິດການເມືອງ ຕິດພັນກັບການດຳເນີນກອງປະຊຸມໃຫຍ່, ຕິດພັນກັບການກວດກາໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ແລະ ການອອກບັດ-ມອບບັດຢັ້ງຢືນໃຫ້ສະມາຊິກພັກ 2.836 ສະຫາຍ, ຍິງ 728 ສະຫາຍ; ຜ່ານການຈັດຕັ້ງປະຕິບັດໄດ້ເຮັດໃຫ້ຄວາມຮັບຜິດຊອບທາງດ້ານການເມືອງ, ສ້າງໄດ້ຄວາມເປັນເອກະພາບທາງດ້ານແນວຄິດ, ປັບປຸງທັດສະນະຫລັກໝັ້ນ, ຄຸນສົມບັດສິນທຳປະຕິວັດ, ເຊີດຊູຈິດໃຈຮັກຊາດຮັກລະບອບປະຊາທິປະໄຕ ປະຊາຊົນ ສູງຂຶ້ນເທື່ອລະກ້າວ.

ໄດ້ເອົາໃຈໃສ່ປັບປຸງບູລະນະກົງຈັກການຈັດຕັ້ງ, ຮາກຖານພັກຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ, ຍົກສູງຄວາມສາມາດການນຳພາຂອງອົງຄະນະພັກເມືອງ, ຄະນະພັກຮາກຖານ ແລະ ໜ່ວຍພັກ ດ້ວຍການທາບທາມເປົ້າໝາຍຄະນະພັກ ຕິດພັນກັບການດຳເນີນກອງປະຊຸມໃຫຍ່ແຕ່ລະຂັ້ນ, ໄດ້ເອົາໃຈໃສ່ຂະຫຍາຍໜ່ວຍພັກເຂດຫ່າງໄກສອກຫລີກ, ຮັກສາໄດ້ຄວາມສາມັກຄີເປັນເອກະພາບພາຍໃນພັກຢ່າງໜັກແໜ້ນ, ມີລະບຽບວິໄນຢ່າງເຂັ້ມງວດ.

ທົ່ວແຂວງມີໜ່ວຍພັກ 396 ໜ່ວຍ ທຽບໃສ່ປີ 2010 ເພີ່ມຂຶ້ນ 30,7%, ໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ 157 ໜ່ວຍ, ທຽບໃສ່ປີ 2010 ເພີ່ມຂຶ້ນ 83 ໜ່ວຍ, ເທົ່າກັບ 20,9%, ໜ່ວຍພັກແຂງດ້ານໃດດ້ານໜຶ່ງ 107 ໜ່ວຍ,

ໜ່ວຍພັກກາງ 83 ໜ່ວຍ, ບໍ່ໄດ້ແບ່ງປະເພດ 49 ໜ່ວຍ; ມີສະມາຊິກພັກ 7.095 ສະຫາຍ, ຍິງ 1.664 ສະຫາຍ. ໃນນັ້ນ, ສະມາຊິກພັກສົມບູນ 6.314 ສະຫາຍ, ທຽບໃສ່ປີ 2010 ເພີ່ມຂຶ້ນ 21,4%; ສະມາຊິກພັກແຂງຮອບດ້ານ 1.162 ສະຫາຍ, ຍິງ 335 ສະຫາຍ, ແຂງດ້ານໃດດ້ານໜຶ່ງ 3.346 ສະຫາຍ, ຍິງ 724 ສະຫາຍ, ກາງ 1.843, ຍິງ 402 ສະຫາຍ, ອ່ອນ 119 ສະຫາຍ, ຍິງ 25 ສະຫາຍ, ເສຍທາດ 7 ສະຫາຍ, ຍິງ 1 ສະຫາຍ, ບໍ່ໄດ້ຈັດປະເພດ 618 ສະຫາຍ, ຍິງ 177 ສະຫາຍ; ມີເງິນສະຕິພັກ 192 ລ້ານກີບ, ສົ່ງໃຫ້ຂັ້ນເທິງ 96 ລ້ານ ກີບ, ຈ່າຍເຂົ້າໃນວຽກງານພັກ 27 ລ້ານກີບ, ເງິນຍັງເຫຼືອໃນຄັງປັດຈຸບັນ 68 ລ້ານກີບ.

ເອົາໃຈໃສ່ປັບປຸງແບບແຜນວິທີນຳພາ ແລະ ວິທີເຮັດວຽກຂອງຄະນະພັກແຕ່ລະຂັ້ນ ຕາມຫລັກການລວມສູນປະຊາທິປະໄຕ ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ເສີມຂະຫຍາຍປະຊາທິປະໄຕ ແລະ ສົ່ງເສີມຫົວຄິດປະດິດສ້າງຂອງສະມາຊິກພັກ-ພະນັກງານຢ່າງກວ້າງຂວາງ; ປະຕິບັດລະບອບປະຊຸມ, ມີແຜນການ, ແຜນງານ; ປະຕິບັດລະບອບລາຍງານສ່ອງແສງ, ຮ່ວມຊີວິດປະຈຳເດືອນປົກກະຕິ, ເຮັດໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານ ມີທັດສະນະຖືກຕ້ອງ ແລະ ມີຄວາມສາມັກຄີເປັນປຶກແຜ່ນຢູ່ພາຍໃຕ້ການນຳພາຂອງອົງຄະນະພັກ.

- ເອົາໃຈໃສ່ບຳລຸງ, ກໍ່ສ້າງ ຕິດພັນກັບການປະຕິບັດໜ້າທີ່ການເມືອງຂອງພະນັກງານເປັນປົກກະຕິ, ສ້າງເງື່ອນໄຂຮອບດ້ານໃຫ້ພະນັກງານໄດ້ມີຄວາມເຕີບໃຫຍ່, ມີໂອກາດພັດທະນາຕົນເອງ ດ້ວຍການຫັນປ່ຽນເອົາພະນັກງານລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ເຂົ້າໃນຂະບວນການວຽກງານຕົວຈິງ, ສ້າງພະນັກງານສືບທອດປ່ຽນແທນ, ຕິດພັນກັບການຂຶ້ນແຜນກຳນົດພະນັກງານໃນແຕ່ລະໄລຍະ, ແຕ່ລະປະເພດ; ເອົາໃຈໃສ່ຕໍ່ການບຳລຸງສ້າງຖັນແຖວພະນັກງານດ້ວຍການຈັດຕັ້ງຝຶກອົບຮົມ, ສົ່ງໄປທັດສະນະສຶກສາ, ຍົກລະດັບໄລຍະສັ້ນ, ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງເປັນລະບົບຄົບຊຸດ ເຊັ່ນ: ດ້ານທິດສະດີການເມືອງ-ການປົກຄອງ 646 ຄົນ, ຍິງ 121 ຄົນ, ທຽບໃສ່ປີ 2010 ເພີ່ມຂຶ້ນ 552 ຄົນ, ຍິງ 103 ຄົນ ໃນນັ້ນ: ຢູ່ພາຍໃນປະເທດ 563 ຄົນ, ຍິງ 94 ຄົນ, ຢູ່ຕ່າງປະເທດ 38 ຄົນ, ຍິງ 8 ຄົນ.

- ຄະນະພັກທຸກຂັ້ນໄດ້ເອົາໃຈໃສ່ກວດກາການນຳພາຂອງຄະນະພັກ, ສະມາຊິກພັກ ແລະ ກວດກາການຄຸ້ມຄອງຂອງລັດແຕ່ລະຂັ້ນ, ໂດຍສົມທົບລະຫວ່າງການກວດກາເປັນປົກກະຕິ ກັບການກວດກາຕາມຄຳສັ່ງ, ກວດກາຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ກວດກາແບບແຜນວິທີເຮັດວຽກຂອງພະນັກງານ-ລັດຖະກອນໃນການປະຕິບັດລະບຽບກົດໝາຍ; ຜ່ານການກວດກາພວກເຮົາສາມາດພົບເຫັນດ້ານຕັ້ງໜ້າ ແລະ ຫຍໍ້ທໍ້; ໄດ້ຈຳກັດ ແລະ ແກ້ໄຂຈຸດອ່ອນ, ຂໍ້ຂາດຕົກບົກຜ່ອງ, ການສວຍໂອກາດ, ການສໍ້ລາດບັງຫລວງ, ສວຍໃຊ້ໜ້າທີ່ຫາຜົນປະໂຫຍດຂອງພະນັກງານ, ສະມາຊິກພັກຈຳນວນໜຶ່ງ, ປະຕິບັດວິໄນຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດ ເຮັດໃຫ້ບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດແຕ່ລະຂັ້ນໄດ້ຮັບການເຊີດຊູຂຶ້ນ.

**ສັງລວມແລ້ວ:** ພວກເຮົາໄດ້ພ້ອມກັນຈັດຕັ້ງຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ກໍ່ຄືມະຕິ IX ອົງຄະນະພັກແຂວງອັດຕະປື ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ, ມີບາງດ້ານກໍ່ລື່ນຄາດໝາຍ, ເຮັດໃຫ້ທົ່ວແຂວງມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການພັດທະນາດີຂຶ້ນດ້ວຍບາດກ້າວໃໝ່ທີ່ໜັກແໜ້ນກວ່າເກົ່າ.

ສາເຫດທີ່ຍາດມາໄດ້ນັ້ນ ແມ່ນຍ້ອນມີແນວທາງນະໂຍບາຍອັນຖືກຕ້ອງຂອງພັກ ແລະ ການເອົາໃຈໃສ່ໃກ້ຊິດຕິດແທດຂອງກົມການເມືອງສູນກາງພັກ, ຄະນະພັກ-ອຳນາດການປົກຄອງແຂວງແຕ່ລະຂັ້ນໄດ້ເຊີດຊູຄວາມຮັບຜິດຊອບຂອງຕົນຊີ້ນຳໆພາ, ຫັນແນວທາງ, ມະຕິ, ຄຳສັ່ງ ເປັນແຜນງານ, ໂຄງການລະອຽດ ຈັດຕັ້ງປະຕິບັດຢ່າງແຖດເຖິງຕົວຈິງ; ຍ້ອນມີຄວາມສາມັກຄີອັນເປັນປຶກແຜນຂອງທົ່ວປວງຊົນ, ຍ້ອນມີການສະໜັບສະໜູນຊ່ວຍເຫລືອຈາກບັນດາເພື່ອນມິດຍຸດທະສາດ ແລະ ອົງການຈັດຕັ້ງສາກົນຕະຫຼອດມາ.

ຂ້າພະເຈົ້າໃນນາມຕາງໜ້າໃຫ້ຄະນະບໍລິຫານງານພັກແຂວງ ແລະ ຜູ້ແທນກອງປະຊຸມໃຫຍ່ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອຕໍ່ກົມການເມືອງສູນກາງພັກ, ລັດຖະບານ ແລະ ການນຳພັກ-ລັດຂັ້ນສູນກາງ, ເຊິ່ງຍາມໃດກໍ່ໄດ້ເປັນຫວ່ງເປັນໄຍໃກ້ສິດຊີ້ນຳ-ນຳພາຢ່າງຈິດຈໍເປັນປະຈຳຕໍ່ແຂວງຂອງພວກເຮົາ; ຂໍສະແດງຄວາມຍ້ອງຍໍຊົມເຊີຍມາຍັງ

ຄະນະພັກ, ອໍານາດການປົກຄອງທຸກຂັ້ນ, ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆພາຍໃນແຂວງ ທີ່ໄດ້ອຸທິດສະຕິປັນຍາ, ເຫື່ອແຮງ ແລະ ວັດຖຸຊັບສິນຂອງຕົນປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາແຂວງອັດຕະປື; ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ບັນດາແຂວງໃກ້ຄຽງ ທີ່ໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາແຂວງອັດຕະປືຂອງພວກເຮົາຕະຫລອດມາ **( ຂໍຊົມເຊີຍຢ່າງສຸດໃຈ ).**

**ບັນດາສະຫາຍທີ່ນັບຖື ແລະ ຮັກແພງ !**

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມາຂ້າງເທິງນັ້ນ, ກໍ່ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງ ຈໍານວນໜຶ່ງທີ່ຈະສືບຕໍ່ແກ້ໄຂໃນຊຸມປີຕໍ່ໜ້າ **ດັ່ງນີ້:**

1. ການສຶກສາອົບຮົມນໍາພາ ການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ເຖິງວ່າເຮັດໄດ້ຫລາຍແຕ່ກໍ່ຍັງລັກສະນະລວມໆ ຜົນໄດ້ຮັບບໍ່ສູງ; ພະນັກງານ, ສະມາຊິກພັກຈໍານວນໜຶ່ງຄວາມຮັບຮູ້ກໍາແໜ້ນແນວທາງຂອງພັກບໍ່ເລິກເຊິ່ງ, ທັດສະນະຫລັກໝັ້ນການເມືອງບໍ່ໜັກແໜ້ນ; ການດໍາເນີນຊີວິດການເມືອງພາຍໃນພັກ, ເນື້ອໃນບໍ່ທັນແທດເໝາະ ບໍ່ຕິດພັນກັບການແກ້ໄຂບັນຫາຕົວຈິງ ບໍ່ກ້າຕໍານິຕົນເອງ ແລະ ຕໍານິສິ່ງຂ່າວກໍ່ສ້າງຊ່ວຍເຫລືອກັນ, ແນວຄິດຈິ່ງຈຽມມັກສະຫງົບຍັງແຜ່ຫລາຍ ແລະ ໜັກໜ່ວງຢູ່ພາຍໃນພັກ.

2. ການປັບປຸງລະບົບການເມືອງ ຍັງບໍ່ທັນໄປຕາມທິດກະທັດລັດ; ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍຍັງບໍ່ທັນສັກສິດ, ການເຜີຍແຜ່ ແລະ ສ້າງສະຕິກົດໝາຍຍັງບໍ່ທັນແຂງແຮງ, ພະຍາດອາດຍາສິດ, ຄວາມບໍ່ໂປ່ງໃສໃນກົງຈັກພັກ-ລັດ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເດັດຂາດເຂັ້ມງວດ.

3. ເຖິງວ່າພວກເຮົາມີຄວາມຕັ້ງໜ້າສ້າງໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ແຕ່ມີບາງດ້ານການຫັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ກໍ່ຄືການສ້າງບ້ານປ້ອມໝັ້ນ, ກຸ່ມບ້ານສູ້ຮົບຕິດລ່ຽນບໍ່ທັນໄດ້ດີເທົ່າທີ່ຄວນ, ໄດ້ແຕ່ຈໍານວນ, ຄຸນນະພາບຍັງອ່ອນ, ຮາກຖານບໍ່ທັນເຂັ້ມແຂງ; ການສ້າງພະແນກການ ແລະ ກົມກອງພັດທະນາຍັງບໍ່ທັນໄດ້; ຈໍານວນບ້ານພັດທະນາຍັງເຮັດໄດ້ໜ້ອຍ ແລະ ຄຸນນະພາບບໍ່ທັນສູງ; ບັນດາປະກົດການຫຍໍ້ທໍ້ຕ່າງໆຍັງບໍ່ທັນໄດ້ຮັບການແກ້ໄຂພໍເທົ່າໃດ ເປັນຕົ້ນ: ການລັກລອບຂຸດຄົ້ນຊັບພະຍາກອນທໍາມະຊາດຊະຊາຍ, ການລ່າສັດນໍ້າ-ສັດປ່າເຂດຫວ່ງຫ້າມ, ການພະນັນ, ບັນຫາຢາເສບຕິດ, ຂີ້ລັກງັດແງະ, ປຸ້ນຈີ້ຊິງຊັບພົນລະເມືອງ, ໂສເພນີ, ອຸປະຕິເຫດຕາມທ້ອງຖະໜົນ ແລະ ອື່ນໆ ຍັງມີລັກສະນະຊໍາເຮື້ອ ເຮັດໃຫ້ສັງຄົມວິພາກວິຈານຈົ່ມວ່າອັນພາໃຫ້ມີຜົນກະທົບທາງລົບຕໍ່ການນໍາຂອງພັກ ແລະ ການຄຸ້ມຄອງລັດ.

4. ການພັດທະນາເສດຖະກິດ ເຖິງວ່າມີຜົນສໍາເລັດຫລາຍດ້ານ ແຕ່ຖ້າທຽບໃສ່ທ່າແຮງບົ່ມຊ້ອນທີ່ມີ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາຍັງມີບາງດ້ານບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະແມ່ນການຜະລິດສິນຄ້າຂອງປະຊາຊົນບໍ່ທັນແຂງແຮງ, ບໍ່ທັນມີອັນເປັນພື້ນຖານ, ຕົວແບບການຜະລິດໃໝ່ທີ່ຍືນຍົງຍັງມີໜ້ອຍ; ການເຕີບໂຕຂອງເສດຖະກິດພາຍໃນແມ່ນໄດ້ມາຈາກພື້ນຖານຄ່າໃຊ້ຈ່າຍການລົງທຶນພາຍໃນ ແລະ ຕ່າງປະເທດ; ການຈັດສັນ, ຄຸ້ມຄອງການນໍາໃຊ້ທີ່ດິນຫລາຍບ່ອນຍັງສັບສົນ, ການເກັບລາຍຮັບພາສີທີ່ດິນຍັງຕໍ່າ, ການປະຕິບັດໂຄງການນອກແຜນຍັງມີລັກສະນະເພີ່ມຂຶ້ນເຮັດໃຫ້ເກີດມີໜີ້ສິນ; ການຄຸ້ມຄອງລາຍຮັບ-ລາຍຈ່າຍມີບາງດ້ານບໍ່ໄປຕາມວິໄນການເງິນ, ການຊຸກຍູ້ສິ່ງເສີມສ້າງເງື່ອນໄຂໃຫ້ປະຊາຊົນສ້າງຖານລາຍຮັບໃໝ່ເພື່ອເພີ່ມລາຍຮັບງົບປະມານບໍ່ທັນເຂັ້ມແຂງ; ການຈ່າຍງົບປະມານຍັງອາໃສການດຸ່ນດ່ຽງຈາກສູນກາງຫລາຍກວ່າເຄິ່ງໜຶ່ງຂອງລາຍຈ່າຍທັງໝົດຂອງແຕ່ລະປີ; ການພັດທະນາບາງດ້ານບໍ່ທັນຕິດພັນກັບການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ; ການສ້າງ ແລະ ປັບປຸງຫົວໜ່ວຍທຸລະກິດຂອງລັດ ແລະ ເສດຖະກິດຮ່ວມມືຂອງປະຊາຊົນບໍ່ທັນໄດ້ດີ; ການດຶງດູດການລົງທຶນໃສ່ບັນດາໂຄງການຈຸດສຸມບໍ່ທັນຫລາຍ ແລະ ແຂງແຮງ; ການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂະໜາດໃຫຍ່ຫຼາຍໂຄງການທີ່ລົງທຶນສູງ ແຕ່ຄຸນນະພາບຍັງຕໍ່າ ບໍ່ສົມຄູ່ກັບການລົງທຶນ.

5. ຕາໜ່າງການສຶກສາ, ສາທາລະນະສຸກ ໄດ້ຂະຫຍາຍຕົວກວ້າງຂວາງແຕ່ຄຸນນະພາບການສຶກສາຍັງຕໍ່າ, ການສະໜອງອຸປະກອນການຮຽນການສອນ ແລະ ການສະໜອງຄູໃຫ້ເຂດຊົນນະບົດຫ່າງໄກສອກຫລີກບໍ່ພຽງພໍ; ດ້ານ

ກິລາກາຍຍະກຳເຖິງວ່າມີການຈັດຕັ້ງແຕ່ການເຄື່ອນໄຫວບໍ່ທັນດຳເນີນຕໍ່ເນື່ອງ; ການສົ່ງເສີມຮັກສາສຸຂະພາບ ແລະ ການບໍລິການດ້ານສາທາລະນະສຸກຢູ່ຕົວເມືອງ ແລະ ຮາກຖານບໍ່ທັນມີຄຸນນະພາບສູງ; ການປະຕິບັດນະໂຍບາຍສັງຄົມບໍ່ທັນດີເທົ່າທີ່ຄວນ; ການສ້າງສີມືແຮງງານບໍ່ທັນພຽງພໍ, ການຄຸ້ມຄອງແຮງງານຈາກໂຄງການລົງທຶນພາຍໃນແລະຕ່າງປະເທດບໍ່ທັນຮັດກຸມ; ການອະນຸລັກຮັກສາວັດທະນະທຳ, ສິລະປະວັນນະຄະດີ, ສ້າງແບບແຜນດຳລົງຊີວິດແບບໃໝ່ ຍັງເຮັດບໍ່ທັນໄດ້ຫລາຍ ແລະ ກວ້າງຂວາງ; ການສ້າງຄອບຄົວ, ບ້ານວັດທະນະທຳສ່ວນຫລາຍເຮັດລວມໆດ້ານປະລິມານ ແລະ ຄຸນນະພາບບໍ່ທັນສູງ.

6. ວຽກງານແນວລາວສ້າງຊາດ ແລະ ວຽກງານຈັດຕັ້ງມະຫາຊົນຍັງບໍ່ທັນເຄື່ອນໄຫວຢ່າງແຂງແຮງ, ຮູບການແລະວິທີການເຄື່ອນໄຫວບໍ່ທັນມີເນື້ອໃນຫລາຍຮູບຫລາຍສີ, ໜັກໄປທາງດ້ານບໍລິຫານ; ຂະບວນການຢູ່ຮາກຖານບໍ່ທັນແຂງແຮງຟົດຟື້ນ ແລະ ຫັນປ່ຽນໄປສູ່ອັນໃໝ່.

❖ **ຂໍ້ຄົງຄ້າງທີ່ກ່າວມາຂ້າງເທິງ ເກີດມາຈາກຫລາຍສາເຫດ ແຕ່ສາເຫດຕົ້ນຕໍແມ່ນ:**

1. ຍ້ອນການເຊື່ອມຊຶມກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ບໍ່ໜັກແໜ້ນ ແລະ ເລິກເຊິ່ງ. ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງສະມາຊິກພັກ, ພະນັກງານ, ລັດຖະກອນຈຳນວນໜຶ່ງ ຍັງບໍ່ທັນມີຄວາມຕື່ນຕົວເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຍັງບໍ່ທັນສູງ ບວກກັບຄວາມເຄີຍສິນໃນການດຳລົງຊີວິດຂອງປະຊາຊົນບັນດາເຜົ່າຈຳນວນໜຶ່ງຍັງຮັກສາເດີມ ແລະ ທັດສະນະໃນການປັບຕົວສູ່ອັນໃໝ່ຍັງຊັກຊ້າ.

2. ຍ້ອນການບຸກທະລຸທາງດ້ານຈິນຕະນາການຈາກອັນເກົ່າໄປສູ່ອັນໃໝ່ ຕິດພັນກັບຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຄະນະພັກ, ສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫລວດ ຈຳນວນໜຶ່ງຍັງຂາດການປະດິດສ້າງ, ທັດສະນະກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບຍັງບໍ່ທັນສູງ.

3. ຄວາມຕ້ອງການ ແລະ ຄວາມຈຳເປັນໃນການພັດທະນາມີສູງ ແຕ່ການຕອບສະໜອງດ້ານບຸກຄາລະກອນຜູ້ທີ່ມີຄວາມຮູ້ຄວາມສາມາດເຂົ້າໃນກິງຈັກການຈັດຕັ້ງ ຍັງຂາດທາງດ້ານຈຳນວນ ແລະ ຄຸນນະພາບ.

4. ການຄຸ້ມຄອງລາຍຮັບ-ລາຍຈ່າຍບໍ່ໄປຕາມວິໄນການເງິນ, ການຊຸກຍູ້ສົ່ງ ເສີມສ້າງເງື່ອນໄຂໃຫ້ປະຊາຊົນສ້າງຖານລາຍຮັບໃໝ່ ເພື່ອເພີ່ມລາຍຮັບງົບປະມານບໍ່ທັນເຂັ້ມແຂງ. ການຈ່າຍງົບປະມານຍັງອາໃສການດຸ່ນດ່ຽງຈາກສູນກາງຫລາຍກວ່າເຄິ່ງໜຶ່ງ.

5. ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ໃນແຕ່ລະຂົງເຂດຍັງບໍ່ທັນຮັດກຸມ.

❖ **ບົດຮຽນທີ່ຖອດຖອນໄດ້.**

ຜ່ານໄລຍະ 5 ປີແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງຄະນະບໍລິຫານງານພັກແຂວງສາມາດຖອດຖອນບົດຮຽນໄດ້ ດັ່ງນີ້:

1. ຖືເອົາການສຶກສາອົບຮົມການເມືອງ-ນຳພາແນວຄິດດ້ວຍການຈັດຕັ້ງເຜີຍແຜ່, ແນະນຳ, ຄົ້ນຄ້ວາຮ່ຳຮຽນແນວທາງ, ມະຕິ ຂອງພັກໃນຖັນແຖວສະມາຊິກພັກໃຫ້ມີທັດສະນະຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຢ່າງເລິກເຊິ່ງທົ່ວເຖິງ; ບັນຫາຕັດສິນຊີ້ຂາດແມ່ນຄວາມສາມັກຄີປອງດອງພາຍໃນທົ່ວສັງຄົມ, ຊັ້ນຄົນຕ່າງໆ ແລະ ຄວາມເປັນເອກະພາບພາຍໃນພັກ, ຕິດພັນກັບການມອບໝາຍຄວາມຮັບຜິດຊອບ, ມອບສິດ, ມອບງົບປະມານ ປະຕິບັດໃຫ້ຈະແຈ້ງຂາດຕົວ ພ້ອມທັງມີການຕິດຕາມກວດກາ, ຊຸກຍູ້ ແລະ ຊ່ວຍເຫຼືອແກ້ໄຂບັນຫາທີ່ເປັນອຸປະສັກຢ່າງເປັນປະຈຳແມ່ນສິ່ງຮັບປະກັນໃຫ້ການດຳເນີນວຽກງານຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດ.

2. ເພີ່ມທະວີບົດບາດການຊີ້ນຳ-ນຳພາຂອງຄະນະພັກ, ອຳນາດການປົກຄອງທຸກຂັ້ນ ເຂົ້າໃນຂົງເຂດວຽກງານໃຫ້ແທດເຖິງ ແລະ ຜັນຂະຫຍາຍແນວທາງຂອງພັກໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ.

3. ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານຢ່າງແຂງແຮງ ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ເປັນປັດໃຈຕັດສິນໃນການຫັນເອົາແນວທາງນະໂຍບາຍ ລົງສູ່ຮາກຖານໃຫ້ກາຍເປັນຄວາມຮັບຮູ້ຄວາມເຂົ້າໃຈ, ກາຍເປັນການກະທຳຕົວຈິງເຮັດໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດສູງສຸດ.

4. ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ, ເງື່ອນໄຂສະດວກເພື່ອດຶງດູດ, ສ້າງຄວາມສິນໃຈໃຫ້ແກ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເປັນເຈົ້າການຍາດແຍ່ງເອົາການຊ່ວຍເຫຼືອຈາກປະເທດເພື່ອນມິດ, ບັນດາອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ.

5. ຮັບປະກັນໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ.

## ພາກທີ II
## ບັນດາທິດທາງໜ້າທີ່ຕົ້ນຕໍ ແລະ ຄາດໝາຍສູ້ຊົນໃນຊຸມປີຕໍ່ໜ້າ

**ກ. ສະພາບແວດລ້ອມ, ສິ່ງທ້າທາຍ, ກາລະໂອກາດ ແລະ ເງື່ອນໄຂເອື້ອອຳນວຍ:**

**1. ສະພາບແວດລ້ອມ**

ໃນຊຸມປີຕໍ່ໜ້ານີ້ສະພາບສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປໄປຕາມທ່າອ່ຽງທີ່ມີຂໍ້ຂັດແຍ່ງ ແລະ ແຂ່ງຂັນກັນ, ມີທັງການຮ່ວມມື, ຮ່ວມສຳພັນກັນ ແລະ ການກໍ່ຕົວຂອງປະຊາຄົມເສດຖະກິດອາຊຽນ ເປັນເງື່ອນໄຂໃຫ້ແຂວງອັດຕະປືພວກເຮົາສ້າງທາງຜ່ານເຊື່ອມຕໍ່ກັບເສດຖະກິດ 3 ປະເທດ ລາວ-ຫວຽດນາມ-ກຳປູເຈຍ, ພາກພື້ນ ແລະ ສາກົນ.

**2. ກາລະໂອກາດ ແລະ ເງື່ອນໄຂເອື້ອອຳນວຍ**

ໃນເງື່ອນໄຂການເປີດກວ້າງການເຊື່ອມໂຍງກັບສາກົນ, ພາກພື້ນ ແລະ ການເຂົ້າເປັນສະມາຊິກອົງການການຄ້າໂລກ ແລະ ປະຊາຄົມເສດຖະກິດອາຊຽນ ເປັນກາລະໂອກາດອັນດີ ໃນການກະຕຸ້ນຊຸກຍູ້ການພັດທະນາຂອງແຂວງ.

ຈາກກາລະໂອກາດດັ່ງກ່າວ ແຂວງອັດຕະປືມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ມີສະໜາມບິນ, ເສັ້ນທາງຜ່ານເຊື່ອມຕໍ່ກັບບັນດາແຂວງ ແລະ ປະເທດເພື່ອນມິດ, ມີແຫຼ່ງຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ, ມີແຫຼ່ງທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຮີດຄອງປະເພນີ, ມີມູນເຊື້ອຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ເປັນພື້ນຖານການພັດທະນາແຂວງອັດຕະປືໃຫ້ມີຄວາມຍືນຍົງ.

**3. ສິ່ງທ້າທາຍທົດສອບ**

ພວກອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ ຍັງສືບຕໍ່ປະຕິບັດກົນອຸບາຍຫັນປ່ຽນມ້າງເພ, ທຳລາຍແຂວງໃນທຸກດ້ານ; ຄວາມສາມາດໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ຍັງຈຳກັດ, ພື້ນຖານການນຳໃຊ້ວັດຖຸເຕັກນິກວິທະຍາສາດຍັງອ່ອນນ້ອຍ, ການຜະລິດເປັນສິນຄ້າຍັງບໍ່ທັນຂະຫຍາຍຕົວ ແລະ ຫຼາກຫຼາຍ, ການຫັນປ່ຽນແນວຄິດເກົ່າຄອງເດີມໄປສູ່ອັນໃໝ່ຍັງຊັກຊ້າ, ການປ່ຽນແປງຂອງໄພທຳມະຊາດ.

**ຂ. ຄາດໝາຍຍຸດທະສາດຮອດປີ 2020-2025-2030**

**1. ໄລຍະຮອດ ປີ 2030**

ສ້າງແຂວງອັດຕະປື ໃຫ້ກາຍເປັນແຂວງສີຂຽວ, ມີສະເໜ່, ສະຫງົບ, ປອດໄພ ກາຍເປັນທາງຜ່ານ, ການທ່ອງທ່ຽວພາຍໃນ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຂອງເຂດສາມຫລ່ຽມພັດທະນາ, ຫັນໄປສູ່ອຸດສະຫະກຳ ແລະ ທັນສະໄໝ, ສ້າງບັນດາເມືອງໃຫ້ມີການພັດທະນາໃກ້ຄຽງກັບເມືອງເທດສະບານ, ສ້າງເທດສະບານເມືອງໄຊເສດຖາເຊື່ອມຈອດກັບເທດສະບານເມືອງສາມັກຄີໄຊ ກາຍເປັນຕົວເມືອງເທດສະບານແຂວງ.

**2. ໄລຍະຮອດ ປີ 2025**

1) ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນຊັ້ນຄົນຕ່າງໆພາຍໃຕ້ການນຳພາຂອງພັກ ເພື່ອຮັບປະກັນໃຫ້ແຂວງເຮົາມີສະຖຽນລະພາບດ້ານການເມືອງ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ເຊີດຊູນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຂຸດຄົ້ນທ່າແຮງບົ່ມຊ້ອນ, ໝູນໃຊ້ກາລະໂອກາດ ເພື່ອຊຸກຍູ້ການຜະລິດສິນຄ້າ ແລະ ສ້າງຄວາມຮັ່ງມີໃຫ້ແກ່ປະຊາຊົນດ້ວຍບາດກ້າວບຸກທະລຸທີ່ໜັກແໜ້ນ.

2) ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ; ກໍ່ສ້າງ ແລະ ປັບປຸງກຳລັງປະກອບອາວຸດທຸກປະເພດຢູ່ທ້ອງຖິ່ນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ມີລະບຽບວິໄນ, ມີແບບແຜນທັນສະໄໝສາມາດເປັນຫລັກແຫລ່ງຮັບປະກັນແກ້ໄຂສະຖານະການທີ່ເກີດຂຶ້ນຢ່າງທັນການ.

3) ສຸມໃສ່ຊີ້ນຳການພັດທະນາເສດຖະກິດຕະຫລາດ ທີ່ມີການດັດສົມຂອງລັດ ຕາມທິດສັງຄົມນິຍົມ, ຊຸກຍູ້ການຜະລິດ-ການປຸງແຕ່ງທີ່ຕິດພັນກັບຕະຫລາດ; ຍູ້ແຮງການຫັນເປັນອຸດສະຫະກຳ ແລະ ທັນສະໄໝ, ຍູ້ແຮງການພັດທະນາຊົນນະບົດຮອບດ້ານ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ ຮັບປະກັນຄວາມປົກຫຸ້ມຂອງເນື້ອທີ່ປ່າໄມ້ໃຫ້ ກວມ 75%.

4) ສຸມໃສ່ການສ້າງຊັບພະຍາກອນມະນຸດ, ຂະຫຍາຍໂອກາດການສຶກສາ, ສາທາລະນະສຸກ ແລະ ວັດທະນະທຳ-ສັງຄົມ, ສ້າງຄົນອັດຕະປືໃຫ້ເປັນຄົນມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ມີອະລິຍະທຳອັນສູງສົ່ງ ເພື່ອເປັນກຳລັງແຮງໃຫ້ການພັດທະນາທີ່ຍືນຍົງ, ສ້າງບ້ານ-ເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສວຍງາມ.

5) ສືບຕໍ່ປັບປຸງກໍ່ສ້າງພັກ ແລະ ອຳນາດການປົກຄອງແຕ່ລະຂັ້ນໃຫ້ເຂັ້ມແຂງມີຄຸນນະທຳ, ມີປະສິດທິພາບ, ມີຄວາມສັກສິດ ແລະ ມີຄວາມໂປ່ງໃສ, ຈຳກັດພະຍາດອາດຍາສິດ, ການສໍ້ລາດບັງຫລວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ໃນກົງຈັກພັກ-ລັດ ແລະ ເສີມຂະຫຍາຍບົດບາດຂອງອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ດຳເນີນການສຶກສາອົບຮົມການເມືອງ-ນຳພາແນວຄິດ ໃນຖັນແຖວພະນັກງານ ປະຊາຊົນບັນດາເຜົ່າເພື່ອເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາເສດຖະກິດ-ສັງຄົມ.

6) ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງໃຫ້ແຂງແຮງ ຕິດພັນກັບການສ້າງບ້ານ, ກຸ່ມບ້ານພັດທະນາ, ສຸມໃສ່ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດຫລາຍຂຶ້ນ.

7) ເພີ່ມທະວີການພົວພັນຮ່ວມມືກັບຕ່າງປະເທດຕາມຫຼັກການຂອງພັກ, ເພື່ອດຶງດູດການລົງທຶນບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ, ໂດຍສະເພາະຮ່ວມມືກັບບັນດາແຂວງໃນຂົງເຂດສາມຫລ່ຽມພັດທະນາ ລາວ-ຫວຽດນາມ-ກຳປູເຈຍ ແລະ ບັນດາອົງການຈັດຕັ້ງສາກົນ ໃຫ້ເກີດຜົນເປັນຈິງຫລາຍຂຶ້ນ ແລະ ເຂົ້າຮ່ວມການເຊື່ອມໂຍງກັບອະນຸພາກພື້ນດ້ວຍຄວາມເປັນເຈົ້າການ.

**3. ໄລຍະຮອດ ປີ 2020.**

1) ຮັບປະກັນໃຫ້ທົ່ວແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍຍຸຕິທຳຢ່າງໜັກແໜ້ນ, ເຮັດໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ສະເລ່ຍບໍ່ໃຫ້ຫລຸດ 10%ຕໍ່ປີ, ລາຍໄດ້ສະເລ່ຍຕໍ່ຫົວຄົນຕ້ອງບັນລຸ 2.900 ໂດລາຕໍ່ຄົນຕໍ່ປີ, ຕ້ອງເຮັດໃຫ້ລາຍໄດ້ຕົວຈິງຂອງປະຊາຊົນເພີ່ມຂຶ້ນ ສາມາດຫລຸດພົ້ນອອກຈາກຄວາມທຸກຍາກ ແລະ ຊີວິດການເປັນຢູ່ດີຂຶ້ນ, ໂຄງປະກອບເສດຖະກິດມີການຫັນປ່ຽນໄປຕາມທິດຫັນເປັນອຸດສະຫະກຳເທື່ອລະກ້າວ.

2) ສູ້ຊົນພັດທະນາແຂວງອັດຕະປືມີຄວາມສີວິໄລ, ສະອາດສວຍງາມ ກາຍເປັນໃຈກາງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດ້ານການເມືອງ, ເສດຖະກິດ-ວັດທະນະທຳສັງຄົມ, ເຊື່ອມໂຍງເຂົ້າກັບສາກົນ ແລະ ປະເທດເພື່ອນມິດຍຸດທະສາດ ສສ ຫວຽດນາມ.

3) ສູ້ຊົນພັດທະນາ 3 ເມືອງໃຫ້ຫລຸດພົ້ນຈາກເມືອງທຸກຍາກໃຫ້ໄດ້ 100%; ສຸມໃສ່ສ້າງເຂດນ້ຳກົງໃຫ້ກາຍເປັນເທດສະບານເມືອງພູວົງໃໝ່, ສ້າງບ້ານພັດທະນາໃຫ້ໄດ້ກວມກວ່າເຄິ່ງໜຶ່ງຂອງຈຳນວນບ້ານ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ, ສ້າງພະແນກ, ຂະແໜງການໃຫ້ໄດ້ຮັບນາມມະຍົດເປັນພະແນກ, ຂະແໜງການພັດທະນາ ແລະ ກົມກອງເຂັ້ມແຂງໃຫ້ໄດ້ 2/3.

4) ສູ້ຊົນບັນລຸເປົ້າໝາຍສະຫັດສະວັດ ແຫ່ງການພັດທະນາຂອງສະຫະປະຊາຊາດ (MDGs) ທີ່ລັດຖະບານໄດ້ຮັບຮອງ.

**ຄ. ທິດທາງໜ້າທີ່ແຕ່ລະຂົງເຂດວຽກງານ.**

**1. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ.**

ສືບຕໍ່ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຮອບດ້ານ ຮັບປະກັນໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ-ສັງຄົມມີຄວາມເປັນລະບຽບຮຽບຮ້ອຍປອດໄພຢ່າງໜັກແໜ້ນ, ປຸກລະດົມພະນັກງານ, ປະຊາຊົນບັນດາເຜົ່າເຂົ້າຮ່ວມຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພາຍໃຕ້ການນຳພາເດັດຂາດໂດຍກົງຮອບດ້ານຂອງພັກ, ປັບປຸງວຽກປ້ອງກັນຂອງກຳລັງ ປກຊ-ປກສ ບ້ານ, ໜ່ວຍປ້ອງກັນຕົວຢູ່ຕາມສຳນັກງານອົງການ; ປັບປຸງບ້ານປ້ອມໝັ້ນ-ກຸ່ມບ້ານສູ້ຣົບຕິດລ່ຽນ ໃຫ້ເຂັ້ມແຂງຮອງຮັບການແກ້ໄຂສະຖານະການໃນທຸກກໍລະນີໃຫ້ທັນການ.

ເພີ່ມທະວີການຊີ້ນຳ-ນຳພາວຽກງານສຶກສາອົບຮົມການເມືອງ-ນຳພາແນວຄິດ, ສ້າງທ່າສະໜາມສົງຄາມປະຊາຊົນ 3 ຂັ້ນ, ມີຄວາມຊື່ສັດ, ມີຄວາມຈົ່ງຮັກພັກດີຕໍ່ພັກ, ຕໍ່ປະຊາຊົນ, ຄຸ້ມຄອງພົນລະເມືອງເຂົ້າ-ອອກ ໃຫ້ເຂັ້ມງວດຕາມລະບຽບກົດໝາຍ ທັງປະກອບສ່ວນເຂົ້າໃນການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດ, ກໍ່ສ້າງກຳລັງທະຫານ, ຕຳຫລວດແຂວງ-ເມືອງ, ຕົ້ນຕໍແມ່ນປັບປຸງ ແລະ ກໍ່ສ້າງກຳລັງ ປກຊ-ປກສ ບ້ານ ໃຫ້ໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການບັນຊາຕາມທິດສ້າງກົມກອງເຂັ້ມແຂງ, ໜ່ວຍພັກຮູ້ນຳພາຮອບດ້ານ, ມີການພົວພັນປະສານງານກັບບັນດາແຂວງທີ່ມີຊາຍແດນເຊື່ອມຈອດ ແລະ ຮ່ວມມືດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບກັບ ສສ ຫວຽດນາມ, ລາຊະອານາຈັກກຳປູເຈຍ ເພື່ອໃຫ້ຊາຍແດນລະຫວ່າງປະເທດມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ເອົາໃຈໃສ່ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ ແລະ ປັບປຸງສູນຟື້ນຟູປິ່ນປົວຜູ້ຕິດຢາເສບຕິດ ໃຫ້ມີຄຸນນະພາບ, ປະສານກັບສາຍຕັ້ງ-ສາຍຂວາງ ແລະ ອົງການຈັດຕັ້ງສາກົນ ເພື່ອດຶງດູດຍາດແຍ່ງເອົາທຶນຊ່ວຍເຫຼືອເພື່ອເຮັດວຽກງານນີ້ໃຫ້ດີຂຶ້ນກວ່າເກົ່າ.

**2. ຂົງເຂດເສດຖະກິດ.**

- **ວຽກງານກະສິກຳ ແລະ ປ່າໄມ້:** ສຸມໃສ່ປັບປຸງພື້ນຖານວັດຖຸເຕັກນິກກະສິກຳ, ສະໜອງແນວພັນ, ຝຶກອົບຮົມວິຊາການເຕັກນິກໃຫ້ຊາວກະສິກອນມີການຫັນປ່ຽນ, ຈາກການຜະລິດແບບທຳມະຊາດໄປສູ່ການຜະລິດໃໝ່ຕາມກົນໄກເສດຖະກິດຕະຫລາດ, ສ້າງໃຫ້ໄດ້ໜຶ່ງບ້ານໜຶ່ງຜະລິດຕະພັນ; ຊຸກຍູ້ການປູກກາເຟຕິດພັນກັບການປຸງແຕ່ງ, ປູກສາລີ, ມັນຕົ້ນ ແລະ ຕົ້ນໄມ້ອຸດສະຫະກຳຕ່າງໆ, ສົ່ງເສີມການລ້ຽງສັດໃຫຍ່ຂອງປະຊາຊົນໂດຍນຳໃຊ້ເຕັກນິກໃໝ່, ສ້າງຄອບຄົວຕົວແບບໃນການຜະລິດກະສິກຳເປັນສິນຄ້າ, ສົ່ງເສີມການຜະລິດເຂົ້າແບບນາຍອດ, ຍົກສະມັດຕະພາບການຜະລິດເຂົ້າ, ປັບປຸງ ແລະ ຄຸ້ມຄອງນຳໃຊ້ຊົນລະປະທານຕາມທິດແບບຍືນຍົງ; ຈັດສັນອາຊີບຄົງທີ່ທີ່ໝັ້ນຄົງໃຫ້ປະຊາຊົນຢູ່ເຂດຫ່າງໄກສອກຫລີກ, ສົ່ງເສີມການປູກ ແລະ ຄຸ້ມຄອງປ່າໄມ້ໃຫ້ມີເນື້ອທີ່ປົກຫຸ້ມຕາມທິດຍືນຍົງ.

- **ວຽກງານອຸດສາຫະກຳ ແລະ ການຄ້າ:** ເສີມຂະຫຍາຍອຸດສະຫະກຳປຸງແຕ່ງຂອງຄອບຄົວຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫ່ຍ; ຮັບປະກັນໃຫ້ການປຸງແຕ່ງສຳເລັດຮູບສົ່ງອອກ ແລະ ຈຳໜ່າຍພາຍໃນ, ປັບປຸງຍົກລະດັບຜົນຜະລິດຂອງໂຮງງານນ້ຳດື່ມ, ນ້ຳກ້ອນ, ດິນຈີ່, ນ້ຳຕານ, ປຸງແຕ່ງໄມ້, ຢາງພະລາ ແລະ ອື່ນໆ ເຂົ້າສູ່ຄຸນນະພາບໃໝ່, ຄຸ້ມຄອງ ແລະ ອານຸຍາດຫົວໜ່ວຍທຸລະກິດ, ການຜະລິດ, ບໍລິການຕາມກົນໄກຕະຫລາດ ແນໃສ່ສ້າງທຸກເງື່ອນໄຂໃຫ້ເກີດຫົວໜ່ວຍຜູ້ປະກອບການດ້ານການຜະລິດ-ການບໍລິການໃຫ້ຫລາຍຂຶ້ນ, ຄຸ້ມຄອງລາຄາສິນຄ້າ, ປັບປຸງຈັດສັນຕະຫລາດ ແລະ ສົ່ງເສີມການຊື້-ຂາຍສິນຄ້າໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ.

- **ວຽກງານໂຍທາທິການ ແລະ ຂົນສົ່ງ:** ສຸມໃສ່ຍົກລະດັບເສັ້ນທາງຍຸດທະສາດພາຍໃນແຂວງ, ກໍ່ສ້າງເສັ້ນທາງປູຢາງແຕ່ແຂວງຫາເມືອງ, ເມືອງຫາບ້ານ ໃຫ້ທຽວໄດ້ສອງລະດູ, ຄຸ້ມຄອງປົກປັກຮັກສາເສັ້ນຫຼວງ, ເສັ້ນທາງໃນຕົວເມືອງໃຫ້ສະອາດ, ຄຸ້ມຄອງສະໜາມບິນ, ຍົກລະດັບລະບົບນ້ຳປະປາໃຫ້ມີຄຸນນະພາບ ແລະ ສະໜອງໃຫ້ພຽງພໍກັບຄວາມຕ້ອງການ, ຄົ້ນຄວ້າອອກແບບຮູບຈຳລອງລະບົບຜັງເມືອງຂອງແຂວງ ແລະ ເມືອງ, ຄຸ້ມຄອງການຂົນສົ່ງໂດຍສານ, ຄຸ້ມຄອງພະຫະນະຮັບປະກັນຄວາມປອດໄພວ່ອງໄວໝັ້ນໃຈຈາກປະຊາຊົນ.

- **ວຽກງານໄປສະນີ, ໂທລະຄົມ ແລະ ການສື່ສານ:** ເພີ່ມທະວີການຄຸ້ມຄອງ ແລະ ຕິດຕາມການນໍາໃຊ້, ການບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ທົ່ວເຖິງ, ວ່ອງໄວ, ຮັບປະກັນດ້ານຄຸນນະພາບ ແລະ ເຂັ້ມງວດ.

- **ວຽກງານພະລັງງານ ແລະ ບໍ່ແຮ່:** ຂະຫຍາຍຕາຂ່າຍໄຟຟ້າແຮງກາງ, ແຮງຕໍ່າ ລົງສູ່ບ້ານໃຫ້ໄດ້ 100%, ຄອບຄົວໄດ້ຊົມໃຊ້ໄຟຟ້າ ກວມເອົາ 98%; ສະໜອງກະແສໄຟຟ້າໃຫ້ໂຮງງານອຸດສະຫະກໍາໄດ້ຢ່າງພຽງພໍ, ຊຸກຍູ້ສົ່ງເສີມ, ຄຸ້ມຄອງໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ, ສໍາຫຼວດແຫລ່ງຜະລິດໄຟຟ້າ, ຕິດຕາມການຂຸດຄົ້ນແຮ່ທາດ ໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

- **ວຽກງານການເງິນ-ທະນາຄານ:** ສູ້ຊົນເກັບລາຍຮັບ, ຄຸ້ມຄອງລາຍຈ່າຍງົບປະມານໃຫ້ຮັດກຸ່ມຕາມວິໄນການເງິນ, ແກ້ໄຂໜີ້ສິນຄຸມເຄືອ, ຕ້ານການຮົ່ວໄຫຼດ້ານງົບປະມານ ແລະ ການໃຊ້ຈ່າຍນອກແຜນ; ດ້ານງົບປະມານໃຫ້ສາມາດກຸ້ມຕົນເອງໃຫ້ໄດ້ຫລາຍກວ່າເຄິ່ງໜຶ່ງ; ສືບຕໍ່ເພີ່ມທະວີການຊີ້ນໍາ-ນໍາພາບັນດາວິສະຫະກິດຂອງລັດ ໃຫ້ກາຍເປັນວິສະຫະກິດທີ່ເຂັ້ມແຂງ ແລະ ການບໍລິການວ່ອງໄວ; ປຸກລະດົມເງິນຝາກ ແລະ ປ່ອຍສິນເຊື່ອ ເພື່ອໃຫ້ປະຊາຊົນໄດ້ເຂົ້າເຖິງທະນາຄານ, ຮັບປະກັນໃຫ້ການຄຸ້ມຄອງ ແລະ ແລກປ່ຽນເງິນຕາ, ການເບີກຈ່າຍເງິນເດືອນ, ການສໍາລະສະສາງຜ່ານລະບົບ ATM.

- **ວຽກງານຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ:** ສຸມໃສ່ການຄຸ້ມຄອງ, ການນໍາໃຊ້ຊັບພະຍາກອນທໍາມະຊາດໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ, ສືບຕໍ່ຈັດສັນທີ່ດິນ, ອອກໃບອະນຸຍາດສິດນໍາໃຊ້ດິນແບບຖາວອນ; ເພີ່ມທະວີປົກປັກຮັກສາປ່າສະຫງວນ, ປ່າປ້ອງກັນ, ແຮ່ທາດ, ແຫລ່ງນໍ້າບໍ່ໃຫ້ບົກແຫ້ງ, ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ປັບປຸງຍົກລະດັບລະບົບອຸຕຸນິຍົມອຸທຸກະສາດ ໃຫ້ສາມາດສະໜອງຂໍ້ມູນຂ່າວສານທາງດ້ານທໍາມະຊາດໃຫ້ຊັດເຈນ ແລະ ທັນເວລາ.

- **ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ:** ຄົ້ນຄວ້າ ແລະ ສົ່ງເສີມການນໍາໃຊ້ເຕັກນິກວິທະຍາສາດ-ເຕັກໂນໂລຊີ ເຂົ້າໃນທຸກຂົງເຂດວຽກງານ, ຕໍ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ; ນໍາໃຊ້ຜົນຂອງການຄົ້ນຄວ້າທົດລອງແນວພັນຕ່າງໆ ເຂົ້າໃນຂົງເຂດກະສິກໍາ-ປ່າໄມ້; ສົ່ງເສີມການນໍາໃຊ້ມາດຕາຖານທີ່ເໝາະສົມໃນຫົວໜ່ວຍທຸລະກິດ; ຕິດຕາມກວດກາ ແລະ ຄຸ້ມຄອງຊັບສິນທາງປັນຍາໃຫ້ສອດຄ່ອງຕາມລະບຽບກົດໝາຍ.

**3. ຂົງເຂດວັດທະນະທໍາ-ສັງຄົມ.**

- **ວຽກງານສຶກສາທິການ ແລະ ກິລາ:** ສືບຕໍ່ປະຕິບັດນະໂຍບາຍປະຣູບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ, ຍົກລະດັບການສຶກສາກາຍເປັນແຫຼ່ງພູມປັນຍາທີ່ມີຄຸນນະພາບດ້ວຍການຈັດຕັ້ງການຮຽນ-ການສອນໃນໂຮງຮຽນວິຊາຊີບ, ໂຮງຮຽນສາມັນສຶກສາຕາມ 5 ຫຼັກມູນ ທັງພາກລັດ ແລະ ເອກະຊົນ, ຮອດປີ 2020 ເຮັດໃຫ້ປະຊາຊົນແຂວງອັດຕະປືຈົບມັດທະຍົມບໍາລຸງຕອນຕົ້ນ-ປາຍ ແລະ ຍົກລະດັບຄວາມຮູ້ຄວາມສາມາດຂອງຜູ້ບໍລິຫານການສຶກສາທຸກຂັ້ນ, ສ້າງໂຮງຮຽນຄຸນນະພາບແບບຢ່າງດ້ານການສຶກສາຢ່າງໜ້ອຍບໍ່ຫຼຸດ 50% ຂອງຈໍານວນໂຮງຮຽນໃນທົ່ວແຂວງ; ແກ້ໄຂສະພາບຂາດຄູສອນ, ຫ້ອງຮຽນ; ຊຸກຍູ້ສົ່ງເສີມເດັກໃນເກນອາຍຸ 6-10 ປີ ໃຫ້ໄດ້ເຂົ້າຮຽນບັນລຸຕາມເປົ້າໝາຍ; ສົ່ງເສີມນັກຮຽນທີ່ມີພອນສະຫວັນຮຽນດີ, ຮຽນເກັ່ງ ( ໂດຍສະເພາະຢູ່ເຂດຊົນນະບົດ, ຫ່າງໄກສອກຫລີກ ) ໃຫ້ໄດ້ຮັບໂອກາດຮຽນຕໍ່ລະດັບສູງຂຶ້ນ; ສົ່ງເສີມການຫລິ້ນກິລາເພື່ອສຸຂະພາບ, ສ້າງນັກກິລາທີ່ມີພອນສະຫວັນປະກອບເຂົ້າໃນທີມຊາດ; ຊຸກຍູ້ສົ່ງເສີມພາກສ່ວນເອກະຊົນມີສ່ວນຮ່ວມໃນວຽກງານສຶກສາ ແລະ ກິລາຢ່າງກວ້າງຂວາງ.

- **ວຽກງານສາທາລະນະສຸກ:** ເອົາໃຈໃສ່ປັບປຸງການບໍລິການດ້ານສາທາລະນະສຸກໃຫ້ມີຄຸນນະພາບ, ເອົາການກັນພະຍາດ, ສົ່ງເສີມສຸຂະພາບເປັນຕົ້ນຕໍ ແລະ ຖືເອົາການປິ່ນປົວເປັນບັນຫາສໍາຄັນ ດ້ວຍການຍົກລະດັບຄວາມຮັບຜິດຊອບ, ຈັນຍາບັນ, ຈັນຍາທໍາ ແລະ ຄວາມຮູ້ຄວາມສາມາດດ້ານວິຊາການຂອງແພດໝໍ; ສົ່ງເສີມການສ້າງກອງທຶນປະກັນສຸຂະພາບທຸກພາກສ່ວນໃຫ້ເຕີບໃຫຍ່, ປະຕິບັດນະໂຍບາຍການປິ່ນປົວເສຍຄ່າ ແລະ ບໍ່ເສຍຄ່າ; ສ້າງບ້ານແບບ

ຢ່າງດ້ານສາທາລະນະສຸກ ແລະ ປຸກລະດົມປະຊາຊົນແຕ່ລະຄອບຄົວໄດ້ຊົມໃຊ້ວິດຖ່າຍ, ຊົມໃຊ້ນ້ຳສະອາດ ເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ.

**- ວຽກງານກາແດງ** ສືບຕໍ່ເຄື່ອນໄຫວປຸກລະດົມທົ່ວສັງຄົມ ປະກອບສ່ວນທຶນຮອນ, ວັດຖຸປັດໃຈ ແລະ ບໍລິຈາກເລືອດ ເພື່ອຊ່ວຍເຫລືອບັນເທົາທຸກຜູ້ທຸກຍາກຂາດເຂີນ, ຜູ້ປະສົບເຄາະຮ້າຍຈາກໄພພິບັດ ໃຫ້ໄດ້ຫລາຍກວ່າເກົ່າ.

**- ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:** ຄຸ້ມຄອງ ແລະ ຍົກລະດັບວຽກງານຖະແຫຼງຂ່າວ-ສື່ມວນຊົນ ໃຫ້ໄປສູ່ທັນສະໄໝ, ປັບປຸງຄຸນນະພາບໃຫ້ກາຍເປັນກະບອກສຽງທີ່ແຫຼມຄົມໃນການໂຄສະນາແນວທາງຂອງພັກ-ກົດໝາຍຂອງລັດ ໃຫ້ໄປເຖິງປະຊາຊົນຢູ່ເຂດຫ່າງໄກສອກຫຼີກສາມາດເຂົ້າເຖິງຂໍ້ມູນ-ຂ່າວສານຈາກສື່ຕ່າງໆຫຼາຍຂຶ້ນ; ສະໜອງອຸປະກອນທີ່ທັນສະໄໝໃຫ້ແກ່ສະຖານີໂທລະພາບ-ວິທະຍຸ ແລະ ວາລະສານ ຂອງແຂວງໃຫ້ພຽງພໍຕາມຫຼັກວິຊາການ; ປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ, ສິລະປະວັນນະຄະດີອັນດີງາມຂອງຊາດ ແລະ ທ້ອງຖິ່ນ; ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ, ປະຫວັດສາດ ໂດຍມີສ່ວນຮ່ວມຂອງປະຊາຊົນໃຫ້ກາຍເປັນບ່ອນພັກຜ່ອນ, ບ່ອນສຶກສາອົບຮົມໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ; ສ້າງຄອບຄົວ-ບ້ານວັດທະນະທຳໃຫ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຕິດພັນກັບການສ້າງບ້ານພັດທະນາໃຫ້ເປັນຂະບວນຟົດຟື້ນກວ່າເກົ່າ.

**- ວຽກງານແຮງງານ ແລະ ສະຫວັດດີການສັງຄົມ:** ເອົາໃຈໃສ່ຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດ, ພັດທະນາສີມືແຮງງານ, ຊອກວຽກເຮັດງານທຳ, ສະໜອງແຮງງານໃຫ້ຫົວໜ່ວຍທຸລະກິດຕ່າງໆ; ປະຕິບັດນະໂຍບາຍຜູ້ທີ່ມີຜົນງານຕໍ່ປະເທດຊາດຕໍ່ການປະຕິວັດ, ຊ່ວຍເຫລືອປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ຜູ້ດ້ອຍໂອກາດ.

**4. ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ການທົດລອງສາມສ້າງ.**

ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ເພື່ອແກ້ໄຂຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າ ສ້າງໃຫ້ບ້ານມີພື້ນຖານທາງດ້ານການເມືອງ, ດ້ານເສດຖະກິດ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ; ປັບປຸງຍົກສູງຄວາມອາດສາມາດນຳພາຂອງຄະນະພັກ ໃຫ້ໄປຄຽງຄູ່ກັບການປັບປຸງຄວາມສາມາດໃນຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ສືບຕໍ່ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ດ້ວຍການຫັນວຽກ, ຄົນ ແລະ ຫັນງົບປະມານ ລົງສູ່ຈຸດສຸມຮາກຖານ.

**5. ວຽກງານປັບປຸງອົງການບໍລິຫານລັດຂັ້ນແຂວງ:**

**- ວຽກງານສະພາແຫ່ງຊາດເຂດ 17:** ເອົາໃຈໃສ່ຍົກສູງຄຸນນະພາບໃນການເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນບັນດາເຜົ່າ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳໃຫ້ວ່ອງໄວ ແລະ ຮັບປະກັນຄວາມຍຸຕິທຳ, ພ້ອມທັງຜັນຂະຫຍາຍຜົນສຳເລັດກອງປະຊຸມຂອງສະພາແຫ່ງຊາດແຕ່ລະຄັ້ງໃຫ້ທົ່ວເຖິງ, ຍົກສູງຄຸນນະພາບໃນການພິຈາລະນາຮັບຮອງບັນຫາສຳຄັນຂອງທ້ອງຖິ່ນຕົນ ແລະ ຕິດຕາມກວດກາ ການເຄື່ອນໄຫວຂອງອົງການບໍລິຫານ ແລະ ອົງການຕຸລາການ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ກະກຽມ ແລະ ສ້າງເງື່ອນໄຂຮອບດ້ານໃຫ້ແກ່ການສ້າງຕັ້ງສະພາປະຊາຊົນຂັ້ນແຂວງ.

**- ວຽກງານຄຸ້ມຄອງບໍລິຫານລັດ:** ສືບຕໍ່ປັບປຸງອົງການບໍລິຫານລັດຂັ້ນແຂວງຕາມທິດກະທັດຮັດ, ສົມເຫດສົມຜົນ, ຄຸ້ມຄອງການນຳໃຊ້ພະນັກງານ-ລັດຖະກອນ, ການເລື່ອນຊັ້ນ-ເລື່ອນຂັ້ນ, ການປັບປຸງ, ການຈັດວາງ, ການຊັບຊ້ອນ, ການສອບຄັດເລືອກ; ຈັດຕັ້ງປະຕິບັດນະໂຍບາຍຍ້ອງຍໍສັນລະເສີນຕໍ່ພະນັກງານ, ລັດຖະກອນ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ທີ່ມີຜົນງານດີເດັ່ນ, ເປັນເຈົ້າການປະສານສົມທົບລະຫວ່າງຂະແໜງການ, ສາຍຕັ້ງ ແລະ ສາຍຂວາງໃຫ້ໂລ່ງລ່ຽນ; ຄົ້ນຄວ້າການສ້າງຕັ້ງ, ຍົກເລີກການຈັດຕັ້ງຂັ້ນຕ່າງໆຂອງອົງການບໍລິຫານລັດຕົ້ນຕໍ; ບູລິມະສິດແມ່ນສຸມໃສ່ກໍ່ສ້າງພື້ນຖານໂຄງລ່າງຄົບຊຸດໃຫ້ແກ່ການຍົກຍ້າຍສຳນັກງານປົກຄອງເມືອງພູວົງໄປຢູ່ເຂດນ້ຳກົງ ແລະ ຄຸ້ມຄອງເຂດເຊື່ອມຕໍ່ໃຫ້ຮັດກຸມ ແລະ ໜັກແໜ້ນ.

- **ວຽກງານຍຸຕິທຳ:** ສືບຕໍ່ປັບປຸງກົງຈັກການຈັດຕັ້ງໃນຂົງເຂດວຽກງານຍຸຕິທຳແຕ່ຂັ້ນແຂວງຮອດຮາກຖານໃຫ້ມີຄວາມໜັກແໜ້ນ, ປັບປຸງແບບແຜນວິທີເຮັດວຽກໃຫ້ມີການຫັນປ່ຽນດີຂຶ້ນ, ຮູ້ເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງມີປະສິທິຜົນ. ເອົາໃຈໃສ່ວຽກງານຍຸຕິທຳຮາກຖານ ແລະ ໂຄສະນາເຜີຍແຜ່ກົດໝາຍໃຫ້ປະຊາຊົນຢ່າງທົ່ວເຖິງ, ຍົກລະດັບຄວາມຮັບຮູ້ຄວາມເຂົ້າໃຈ, ສະຕິກົດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍ, ປະຕິບັດຄຳຕັດສິນຂອງສານໃຫ້ນັບມື້ນັບມີຄວາມທ່ຽງທຳ, ສັກສິດ ແລະ ເຂັ້ມງວດ.

- **ວຽກງານໄອຍະການປະຊາຊົນ:** ປັບປຸງອົງການໄອຍະການປະຊາຊົນໃຫ້ເປັນລະບົບຄົບຊຸດ, ມີຄວາມໜັກແໜ້ນເຂັ້ມແຂງສົມຄູ່ກັບລະດັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ, ເອົາໃຈໃສ່ພັດທະນາບຸກຄະລາກອນທາງດ້ານຈຳນວນ ແລະ ຄຸນນະພາບ, ຍົກສູງຄວາມສາມາດໃນການຕິດຕາມກວດກາການປະຕິບັດກົດໝາຍ, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນໃຫ້ເຂັ້ມງວດ.

- **ວຽກງານສານປະຊາຊົນ:** ສືບຕໍ່ປັບປຸງສານປະຊາຊົນໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ ເພື່ອບໍລິຫານວຽກງານໃຫ້ມີຄຸນນະພາບ, ມີປະສິດທິຜົນສູງ; ສະໜອງອຸປະກອນທີ່ທັນສະໄໝຕາມຄວາມເໝາະສົມ ເພື່ອປະຕິບັດພາລະບົດບາດ, ໜ້າທີ່ໃນການພິພາກສາຄະດີໃຫ້ມີຄວາມຊັດເຈນ, ວ່ອງໄວ ແລະ ຍຸຕິທຳ.

**6. ວຽກງານພົວພັນຮ່ວມມືກັບຕ່າງປະເທດ.**

ເພີ່ມທະວີຄວາມສາມັກຄີພິເສດ ແລະ ການພົວພັນຮ່ວມມືຮອບດ້ານກັບບັນດາແຂວງ ສສ ຫວຽດນາມ, ເສີມຂະຫຍາຍສາຍພົວພັນມິດຕະພາບ, ການຮ່ວມມືກັບສາກົນ ແລະ ພາກພື້ນ ເພື່ອດຶງດູດການລົງທຶນ, ຍາດແຍ່ງການຊ່ວຍເຫຼືອດ້ານວິຊາການ, ການພັດທະນາຊັບພະຍາກອນມະນຸດ; ສືບຕໍ່ຮັກສາສາຍພົວພັນທີ່ເປັນປົກກະຕິກັບບັນດາແຂວງ ຣາຊະອານາຈັກກຳປູເຈຍ ເພື່ອເຮັດໃຫ້ຊາຍແດນມິດຕະພາບ, ມີຄວາມສະຫງົບ ເປັນເງື່ອນໄຂເຊື່ອມໂຍງທາງດ້ານເສດຖະກິດ-ສັງຄົມ; ເພີ່ມທະວີການສ້າງພະນັກງານທີ່ເຮັດວຽກພົວພັນຮ່ວມມືກັບຕ່າງປະເທດໃຫ້ມີຄວາມເຂັ້ມແຂງ.

## ພາກທີ III
## ເພີ່ມທະວີບົດບາດ ແລະ ຍົກສູງຄວາມສາມາດການນຳພາຂອງພັກ,
## ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ

ເພື່ອເພີ່ມທະວີບົດບາດການນຳພາຂອງພັກໃນລະບົບການເມືອງ ປະຊາທິປະໄຕ ປະຊາຊົນແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ເຊີດຊູຄວາມສາມາດກຳອຳນາດຂອງພັກໃຫ້ສູງເດັ່ນຂຶ້ນ ສົມຄູ່ກັບໜ້າທີ່ການເມືອງໃນໄລຍະໃໝ່ ຕ້ອງສຸມໃສ່ແຕ່ລະດ້ານ ດັ່ງນີ້:

**1. ກໍ່ສ້າງພັກທາງດ້ານການເມືອງແນວຄິດ.**

ເພີ່ມທະວີກໍ່ສ້າງພັກທາງດ້ານການເມືອງ-ແນວຄິດໃນສະພາບການໃໝ່, ກ່ອນອື່ນໝົດຕ້ອງສ້າງຄວາມຮັບຮູ້ທີ່ເປັນເອກະພາບກັບແນວທາງຂອງພັກ, ສ້າງຄວາມເຊື້ອໝັ້ນຕໍ່ລະບອບໃໝ່ ແລະ ຈຸດໝາຍກ້າວຂຶ້ນຂອງພັກເຮົາຢ່າງໜັກແໜ້ນ; ຄະນະພັກ, ສະມາຊິກພັກທຸກຂັ້ນຕ້ອງຖືວຽກງານການເມືອງ-ແນວຄິດເປັນກົກ, ເຮັດເປັນປະຈຳ ແລະ ເຮັດຢ່າງທົ່ວເຖິງ ແລະ ຢຶດໝັ້ນໃນອຸດົມການຂອງພັກຢ່າງສະເໝີຕົ້ນສະເໝີປາຍ.

ເອົາໃຈໃສ່ປັບປຸງຄຸນນະພາບຂອງສະມາຊິກພັກ, ຮັກສາຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ເປັນແບບຢ່າງໃນການເຄົາລົບລະບຽບກົດໝາຍ. ຍົກລະດັບຄວາມຮູ້ດ້ານທິດສະດີການເມືອງໃຫ້ແກ່ຄະນະໜ່ວຍພັກ, ສະມາຊິກພັກ, ພະນັກງານຫລັກແຫລ່ງຂອງແຂວງ, ເມືອງ ແລະ ບ້ານ ເປັນລະບົບຕໍ່ເນື່ອງ.

**2. ປັບປຸງພັກໃຫ້ໜັກແໜ້ນເຂັ້ມແຂງທາງດ້ານການຈັດຕັ້ງ.**

ສືບຕໍ່ປັບປຸງບູລະນະການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ໂດຍສະເພາະແມ່ນຮາກຖານພັກ, ແກ້ໄຂໜ່ວຍພັກດຽວນຳພາຫລາຍຂົງເຂດ, ຫລາຍຫ້ອງການ; ສຸມໃສ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ

ໃຫ້ໄດ້ 80% ຂຶ້ນໄປ, ເອົາໃຈໃສ່ສະກັດກັ້ນ ແລະ ແກ້ໄຂພະຍາດອາດຍາສິດ, ພະເດັດການອ້າຍດຽວ, ກຸ່ມກ້ອນ, ເຊື້ອສາຍ, ຂາດລະບຽບວິໄນ, ອານາທິປະໄຕ, ບໍ່ນັບຖືການຈັດຕັ້ງ ແລະ ລະເມີດຕໍ່ລະບຽບຂອງພັກ.

ປະຕິບັດລະບອບການເລືອກເຟັ້ນເອົາຜູ້ທີ່ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ພົ້ນເດັ່ນຈາກຂະບວນການຕົວຈິງ ເພື່ອຂະຫຍາຍເຂົ້າພັກ; ປະຕິບັດຕາມກົນໄກເປີດກວ້າງໃຫ້ມະຫາຊົນມີສ່ວນຮ່ວມໃນການສ້າງພັກ ແລະ ຂະຫຍາຍພັກ, ສູ້ຊົນຂະຫຍາຍສະມາຊິກໃໝ່ໃຫ້ເພີ່ມຂຶ້ນທັງປະລິມານ ແລະ ຄຸນນະພາບ; ສືບຕໍ່ຕີລາຄາແບ່ງປະເພດສະມາຊິກພັກໃນແຕ່ລະປີຢ່າງເປັນປົກກະຕິ ບົນພື້ນຖານການປະກອບຄຳຄິດຄຳເຫັນຂອງມະຫາຊົນຢ່າງກວ້າງຂວາງ.

**3. ປັບປຸງແບບແຜນວິທີນຳພາ ແລະ ແບບແຜນວິທີເຮັດວຽກຂອງພັກ.**

ສືບຕໍ່ຢຶດໝັ້ນຫລັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບຢ່າງເຂັ້ມງວດ; ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກໃຫ້ແໜ້ນແຟ້ນ, ເສີມຂະຫຍາຍແບບແຜນນຳພາທີ່ມີໂຄງການ, ແຜນງານ ແລະ ຈຸດສຸມ ແທດເຖິງຕົວຈິງ, ມີການຕິດຕາມກວດກາ, ຊີ້ນຳບັນຊາ ແລະ ສະຫລຸບຖອດຖອນບົດຮຽນ, ປະຕິບັດລະບອບສ່ອງແສງລາຍງານຂໍຄຳເຫັນຢ່າງເປັນປົກກະຕິ, ສືບຕໍ່ປະຕິບັດແບບແຜນອັນເປັນມູນເຊື້ອທັນລົງກໍ່ສ້າງຮາກຖານຕິດພັນກັບປະຊາຊົນ, ປະຕິບັດລະບອບດຳເນີນຊີວິດການເມືອງພາຍໃນພັກ, ກ້າຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນ ແລະ ກັນຢ່າງແຂງແຮງ. ເພີ່ມທະວີການປະດິດສ້າງ, ຄວາມເປັນເຈົ້າການ ແລະ ຄວາມເປັນແບບຢ່າງຂອງຄະນະພັກ, ສະມາຊິກພັກຕໍ່ໜ້າທີ່ການເມືອງທີ່ໄດ້ມອບໝາຍ.

**4. ເພີ່ມທະວີປະສິດທິພາບ ແລະ ຄວາມສັກສິດຂອງວຽກງານກວດກາ.**

ຍົກສູງຄຸນນະພາບຂອງວຽກງານກວດກາການປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ລະບຽບຫລັກການຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ການປະຕິບັດຂໍ້ກຳນົດກົດໝາຍ, ການຝຶກຝົນຫລໍ່ຫລອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ, ສືບຕໍ່ປະຕິບັດລະບອບກວດກາຢ່າງເປັນປົກກະຕິຕໍ່ເນື່ອງ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫລວງ, ຫລິ້ນກິນຟຸ່ມເຟືອຍ, ການຫັນປ່ຽນໂດຍສັນຕິ; ເພີ່ມທະວີການປັບປຸງການຈັດຕັ້ງ ແລະ ແບບແຜນວິທີການກວດກາຂອງອົງການກວດກາແຕ່ລະຂັ້ນໃຫ້ໜັກແໜ້ນໂປ່ງໃສ, ເຮັດໃຫ້ຜົນການກວດກາມີປະສິດທິພາບ ແລະມີຄວາມສັກສິດ, ໂດຍສະເພາະແມ່ນການກວດກາການສໍ້ລາດບັງຫລວງ; ເສີມຂະຫຍາຍຄວາມເປັນເຈົ້າການ ແລະ ການປະກອບສ່ວນຂອງບັນດາການຈັດຕັ້ງໃນລະບົບການເມືອງ, ລວມທັງສື່ມວນຊົນ ແລະ ປະຊາຊົນເຂົ້າຮ່ວມໃນການຕິດຕາມກວດກາ; ປັບປຸງຄືນແບບແຜນວິທີກວດກາຕາມຫລັກການ ແລະ ມາດຕະການຢ່າງເຂັ້ມງວດມີຄວາມທ່ຽງທຳ, ຖືກຕ້ອງຊັດເຈນ, ບໍ່ລຳອຽງ ໂດຍຢຶດໝັ້ນຜົນປະໂຫຍດຂອງປະຊາຊົນ, ຂອງພັກ, ຂອງຊາດ ເປັນພື້ນຖານ; ເພີ່ມທະວີລະບຽບວິໄນ ແລະ ຄວາມເດັດຂາດ, ເຂັ້ມງວດພາຍໃນພັກ ເມື່ອພົບເຫັນຕ້ອງແກ້ໄຂແຕ່ຫົວທີ ເພື່ອປ້ອງກັນພັກ, ປ້ອງກັນພະນັກງານ ບໍ່ໃຫ້ເສື່ອມເສຍຄຸນທາດ.

**5. ວຽກງານພະນັກງານ.**

ເປັນເຈົ້າການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານໃຫ້ໄດ້ທັງດ້ານຈຳນວນ ແລະ ຄຸນນະພາບ, ເອົາໃຈໃສ່ຄຸ້ມຄອງນຳໃຊ້ໃຫ້ມີປະສິດທິຜົນສູງ ແລະ ໃຫ້ຄວາມສຳຄັນຕໍ່ຜູ້ທີ່ມີຄວາມຈູບຈ້າວຫ້າວ, ຟົດຟື້ນ ເຮັດແທ້ທຳຈິງເພື່ອສວນລວມ.

ສືບຕໍ່ສ້າງບາດກ້າວບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ ໂດຍຖືເອົາການກໍ່ສ້າງ, ບຳລຸງຍົກລະດັບໃຫ້ແກ່ຖັນແຖວພະນັກງານເປັນຈຸດສຸມ, ສືບຕໍ່ກວດກາຄືນການວາງແຜນຍຸດທະສາດ ແລະ ຂຶ້ນແຜນກຳນົດພະນັກງານໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານ. ເອົາໃຈໃສ່ເປັນພິເສດການກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານຫລັກແຫລ່ງນຳພາ-ຄຸ້ມຄອງບໍລິຫານແຕ່ລະຂະແໜງການ ແລະ ທ້ອງຖິ່ນ; ຮັບປະກັນຫລັກການສືບທອດປ່ຽນແທນຕໍ່ເນື່ອງ, ໂດຍຖືມາດຕະຖານຄວາມຮູ້ດ້ານແນວທາງຂອງພັກ, ທັດສະນະຫລັກໝັ້ນການເມືອງ ແລະ ຄຸນສົມບັດສິນທຳປະຕິວັດເປັບູລິມະສິດ, ຖືຄວາມຮູ້ຄວາມສາມາດ, ຄວາມບາກບັ່ນສູ້ຊົນ ແລະ ແບບແຜນເຮັດວຽກເປັນສຳຄັນ.

ເພີ່ມທະວີກໍ່ສ້າງພະນັກງານວິຊາການ, ຜູ້ຊ່ຽວຊານດ້ານວິຊາສະເພາະ, ພະນັກງານຄຸ້ມຄອງບໍລິຫານໃຫ້ຫລາຍຂຶ້ນ ເພື່ອຕອບສະໜອງກັບການພັດທະນາ ແລະ ການເຊື່ອມໂຍງ, ສຸມໃສ່ສ້າງພະນັກງານໃຫ້ເມືອງ ແລະ ຮາກຖານຕາມທິດນຳສາມສ້າງ, ພິເສດຕ້ອງສຸມໃສ່ສ້າງໃຫ້ໄດ້ພະນັກງານກັບທີ່, ພະນັກງານຊົນເຜົ່າ, ໜຸ່ມແໜ້ນ ແລະ ເພດຍິງ, ຮັບປະກັນໃຫ້ເມືອງ ແລະ ຮາກຖານມີກຳລັງແຮງ.

ເອົາໃຈໃສ່ຕີລາຄາ, ຊັບຊ້ອນ ແລະ ນຳໃຊ້ພະນັກງານໃຫ້ຖືກຕ້ອງ, ສ້າງເງື່ອນໄຂໃຫ້ໄດ້ຝຶກຝົນທົດສອບໃນຂະບວນວຽກງານຕົວຈິງ ແລະ ມີໂອກາດໄດ້ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນເປັນກ້າວໆ; ສືບຕໍ່ປະຕິບັດລະບອບແບ່ງຂັ້ນຄຸ້ມຄອງ ແລະ ລະບອບການຕິດຕາມກວດກາພະນັກງານເປັນລະບົບ ແລະ ແທດເຖິງ, ຮັບປະກັນໃຫ້ການຄຸ້ມຄອງພະນັກງານໄປຕາມຫລັກການລວມສູນປະຊາທິປະໄຕ, ຄົ້ນຄວ້າຕົກລົງເປັນໝູ່ຄະນະ, ສືບຕໍ່ປະຕິບັດລະບອບເຄື່ອນຍ້າຍ-ສັບປ່ຽນບ່ອນປະຈຳການ, ລະບອບຄວບຕຳແໜ່ງ, ທາບທາມ ຕໍ່ພະນັກງານຫລັກແຫລ່ງ ຕິດພັນກັບການເລື່ອນຊັ້ນ ຫລື ປົດຕຳແໜ່ງ.

ເອົາໃຈໃສ່ຄຸ້ມຄອງ-ປ້ອງກັນພະນັກງານໃຫ້ດີ, ສະກັດກັ້ນບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນຖັນແຖວພະນັກງານ, ສຶກສາອົບຮົມໃຫ້ທຸກຄົນເປັນເຈົ້າການຝຶກຝົນຫລໍ່ຫລອມຕົນເອງ, ສ້າງໃຫ້ມີຄວາມເປັນແບບຢ່າງນຳໜ້າ, ການຈັດຕັ້ງພັກແຕ່ລະຂັ້ນຕ້ອງມີການຕິດຕາມ, ກວດກາ, ຕັກເຕືອນ ແລະ ສຶກສາອົບຮົມໃຫ້ພະນັກງານໃນຂອບເຂດຂອງຕົນຮັບຜິດຊອບຢ່າງເປັນປົກກະຕິ, ຍົກສູງສະຕິເຄົາລົບ ແລະ ປະຕິບັດແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ ແລະ ລະບຽບກົດໝາຍຂອງລັດຢ່າງເຂັ້ມງວດ.

ຕ້ອງເດັດດ່ຽວກ້າຫານຊັບຊ້ອນປ່ຽນແທນພະນັກງານຜູ້ທີ່ບໍ່ມີຄວາມຮັບຜິດຊອບ, ຂາດຄວາມສາມາດ, ຂາດຄວາມເຊື່ອຖືຈາກມະຫາຊົນ, ຜູ້ທີ່ເຊື່ອມທາດຂາດຄຸນ, ມີຄວາມຜິດໜັກໜ່ວງ ແລະ ສ້າງຄວາມເສື່ອມເສຍຕໍ່ພາບພົດບົດບາດຂອງພັກ-ລັດອອກຈາກໜ້າທີ່ຕຳແໜ່ງໃຫ້ທັນການ.

ປັບປຸງລະບອບນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈ ຕໍ່ພະນັກງານໃຫ້ເໝາະສົມ ເພື່ອຊຸກຍູ້ດ້ານຕັ້ງໜ້າ, ສົ່ງເສີມຄວາມຮູ້, ຄວາມສາມາດ ແລະ ຜົນງານອັນໂດດເດັ່ນຂອງພະນັກງານ, ເອົາໃຈໃສ່ເປັນພິເສດຕໍ່ພະນັກງານບຳນານນັກປະຕິວັດອາວຸໂສຜູ້ຊົງຄຸນວຸດທິ, ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ແລະ ການປະຕິວັດໃຫ້ທົ່ວເຖິງ; ປະຕິບັດລະບອບອຸດໜູນບຳເນັດ, ນະໂຍບາຍຕໍ່ຜູ້ທີ່ປະຈຳການຢູ່ເຂດທຸລະກັນດານຫ່າງໄກສອກຫລີກ ແລະ ຫຍຸ້ງຍາກຢ່າງເໝາະສົມ.

**6. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.**

- **ອົງການແນວລາວສ້າງຊາດ:** ຕັ້ງໜ້າສຶກສາອົບຮົມເຕົ້າໂຮມຄວາມສາມັກຄີ, ສ້າງຄວາມເປັນປຶກແຜ່ນຂອງທົ່ວປວງຊົນ ໃຫ້ໄດ້ຢ່າງກວ້າງຂວາງ, ເລິກເຊິ່ງໜັກແໜ້ນ; ເອົາໃຈໃສ່ໂຄສະນາ, ປຸກລະດົມໃຫ້ບັນດາຊັ້ນຄົນ, ຊົນເຜົ່າ, ເພດໄວຕ່າງໆ ເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ໂດຍສະເພາະ ເຂົ້າຮ່ວມໃນຂະບວນການແກ້ໄຂບັນດາປະກົດການຫຍໍ້ທໍ້ໃນສັງຄົມ, ການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກ, ຍູ້ຂະບວນການຜະລິດເປັນສິນຄ້າ ແລະ ປະຕິບັດຄາດໝາຍສະຫັດສະວັດດ້ານການພັດທະນາ ແລະ ອື່ນໆ.

- **ວຽກສະຫະພັນນັກຮົບເກົ່າ:** ສືບຕໍ່ປັບປຸງການຈັດຕັ້ງສະຫະພັນນັກຮົບເກົ່າແຕ່ລະຂັ້ນ ໃຫ້ມີບົດບາດເຂັ້ມແຂງ ແລະ ເຄື່ອນໄຫວກວ້າງຂວາງກວ່າເກົ່າ; ເອົາໃຈໃສ່ສຶກສາອົບຮົມສະມາຊິກສະຫະພັນນັກຮົບເກົ່າ, ຊັ້ນຄົນ, ເພດໄວ ເຂົ້າຮ່ວມໃນການປົກປັກຮັກສາ, ພັດທະນາເສດຖະກິດ-ສັງຄົມ; ສືບຕໍ່ເກັບກຳສະຖິຕິ ແລະ ສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານນັກຮົບເກົ່າຢູ່ທ້ອງຖິ່ນຮາກຖານໃຫ້ດີຂຶ້ນ; ຊຸກຍູ້ບັນດາເມືອງ ແລະ ໜ່ວຍຮາກຖານສ້າງຕັ້ງກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

- **ສະຫະພັນກຳມະບານ:** ປັບປຸງ ແລະ ຂະຫຍາຍການຈັດຕັ້ງໃຫ້ກວ້າງຂວາງດ້ວຍບາດກ້າວອັນໜັກແໜ້ນ ແລະ ມີປະສິດທິຜົນ, ຂະຫຍາຍສະມາຊິກກຳມະບານໃຫ້ຫຼາຍກວ່າເກົ່າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ ແລະ ຊາວຜູ້ອອກແຮງງານ, ເຂົ້າຮ່ວມໃນການຕິດຕາມກວດກາ, ການຄຸ້ມຄອງລັດ, ຄຸ້ມຄອງ

ເສດຖະກິດ-ສັງຄົມ ປະຕິບັດພາລະບົດບາດຈັດຕັ້ງນຳພາ, ເພີ່ມທະວີການສຶກສາອົບຮົມກຳມະກອນ, ຊາວຜູ້ອອກແຮງງານເຄົາລົບ ແລະ ປະຕິບັດກົດໝາຍແຮງງານຢ່າງເຂັ້ມງວດ; ສ້າງສະຕິລະບຽບວິໄນນ້ຳໃຈຮັບຜິດຊອບຂອງກຳມະກອນ ແລະ ຊາວຜູ້ອອກແຮງງານໃນຂະບວນການສ້າງສາພັດທະນາ; ເອົາໃຈໃສ່ປັບປຸງແບບແຜນນຳພາ ແລະ ວິທີເຮັດວຽກສ້າງບົດບາດຂອງຕົນໃຫ້ສູງຂຶ້ນ, ສ້າງຂະບວນການແຂ່ງຂັນປະຕິບັດຄຳຂວັນ 2 ດີ 5 ເປັນເຈົ້າ ໃຫ້ເປັນຂະບວນຟົດຟື້ນ.

- **ຊາວໜຸ່ມ-ເຍົາວະຊົນ:** ຕັ້ງໜ້າສຶກສາອົບຮົມການເມືອງ-ແນວຄິດ ແລະ ປັບປຸງການຈັດຕັ້ງ, ລະບອບແບບແຜນວິທີເຮັດວຽກ ແລະ ການເຄື່ອນໄຫວຂອງຊາວໜຸ່ມ-ໄວໜຸ່ມ ແລະ ເຍົາວະຊົນ ໃຫ້ເລິກເຊິ່ງກວ້າງຂວາງດ້ວຍຫຼາຍຮູບການ, ສ້າງຊາວໜຸ່ມມີສະຕິຮັກຊາດ ເຄົາລົບລະບຽບກົດໝາຍ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ປັບປຸງຄະນະຊາວໜຸ່ມຂັ້ນຮາກຖານ, ຖືເອົາການກໍ່ສ້າງໜ່ວຍຊາວໜຸ່ມຕົວແບບ 4 ບຸກ, ຂໍ້ແຂ່ງຂັນ 3 ດີ 4 ຮູ້ ແລະ 6 ຮັກ 3 ຊັງ ຂອງເຍົາວະຊົນ-ອະນຸຊົນ ໃຫ້ເປັນຈິງ.

- **ສະຫະພັນແມ່ຍິງ:** ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ແລະ ປັບປຸງການຈັດຕັ້ງສະຫະພັນແມ່ຍິງແຕ່ລະຂັ້ນໃຫ້ໜັກແໜ້ນເຂັ້ມແຂງ, ຈັດຕັ້ງປະຕິບັດ ແລະ ພັດທະນາແມ່ຍິງຕາມເນື້ອໃນຄຳຂວັນ 3 ດີ, 6 ແຜນງານ 18 ໂຄງການ; ຊຸກຍູ້ສົ່ງເສີມການສ້າງພະນັກງານເພດຍິງປະກອບເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ, ໃນຂົງເຂດອົງການບໍລິຫານລັດຂັ້ນຕ່າງໆເພີ່ມຂຶ້ນ; ເອົາໃຈໃສ່ຄຸ້ມຄອງ ແລະ ຂະຫຍາຍກອງທຶນກຸ່ມທ້ອນເງິນທີ່ມີແລ້ວໃຫ້ມີຄວາມຍືນຍົງ.

ສືບຕໍ່ປະຕິບັດນະໂຍບາຍສົ່ງເສີມຄວາມສະເໝີພາບລະຫວ່າງບົດບາດຍິງ-ຊາຍ, ເອົາໃຈໃສ່ປົກປ້ອງ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ຮັບປະກັນໃຫ້ແມ່ຍິງໄດ້ເຂົ້າຮ່ວມຢ່າງເຕັມສ່ວນໃນການເຄື່ອນໄຫວດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ; ສ້າງເງື່ອນໄຂໃຫ້ເດັກຍິງເຂົ້າໂຮງຮຽນຊັ້ນປະຖົມ-ມັດທະຍົມປາຍໃຫ້ຫຼາຍຂຶ້ນ.

❖ **ວິທີການຈັດຕັ້ງປະຕິບັດ.**

**1.** ເພີ່ມທະວີບົດບາດການຊີ້ນຳ-ນຳພາຂອງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍຕ້ອງເປັນແບບຢ່າງໃນການຫັນເອົາມະຕິຄັ້ງນີ້ໃຫ້ເປັນແຜນການ, ເປັນແຜນງານ, ເປັນໂຄງການລະອຽດ ໃນແຕ່ລະໄລຍະ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນທ້ອງຖິ່ນ.

**2.** ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ສະມາຊິກພັກ, ພະນັກງານ ຕະຫລອດຮອດປະຊາຊົນບັນດາເຜົ່າ; ເສີມຂະຫຍາຍມູນເຊື້ອຮັກຊາດ, ຮັກລະບອບໃໝ່ບົນຈິດໃຈເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

**3.** ຕັ້ງໜ້າຫັນເອົາແນວທາງ, ມະຕິຄັ້ງນີ້ ລົງເຜີຍແຜ່ ແລະ ຈັດຕັ້ງປະຕິບັດຢູ່ຮາກຖານ ກາຍເປັນຄວາມຮັບຜິດຊອບຂອງຄະນະພັກ, ອຳນາດການປົກຄອງທຸກຂັ້ນ, ທຸກພະແນກການ, ທຸກຂະແໜງການຂອງແຂວງ ແລະ ເມືອງ.

**4.** ປະຕິບັດກົນໄກປະສານສົມທົບຢ່າງກົມກຽວ ລະຫວ່າງຂັ້ນລຸ່ມ-ຂັ້ນເທິງ, ສາຍຕັ້ງ-ສາຍຂວາງ ໃຫ້ເປັນລະບົບແໜ້ນແຟ້ນ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມຄ່ອງຕົວສົມເຫດສົມຜົນ.

**5.** ການຈັດຕັ້ງປະຕິບັດໃນແຕ່ລະໄລຍະຕ້ອງໄດ້ເອົາໃຈໃສ່ຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫລຸບຖອດຖອນບົດຮຽນຢ່າງເປັນປົກກະຕິ.

ຮ່າງລາຍງານການເມືອງທີ່ຂ້າພະເຈົ້າໄດ້ສະເໜີມານັ້ນ ໄດ້ທົບທວນຄືນບັນດາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງກໍ່ຄືມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໂດຍໄດ້ຍົກໃຫ້ເຫັນຜົນສຳເລັດ, ບາງຂໍ້ຄົງຄ້າງ, ສາເຫດຕົ້ນຕໍ, ບົດຮຽນຖອດຖອນໄດ້ ແລະ ທິດທາງ, ວຽກຈຸດສຸມແຕ່ລະດ້ານໃນຕໍ່ໜ້າ ເພື່ອສືບຕໍ່ພັດທະນາແຂວງ ດ້ວຍບາດກ້າວອັນໜັກແໜ້ນ, ນຳເອົາຄວາມຈະເລີນຮຸ່ງເຮືອງສີວິໄລ ແລະ ຍຸຕິທຳມາສູ່ແຂວງອັດຕະປືຂອງພວກເຮົາ.

ຂ້າພະເຈົ້າເຊື່ອໝັ້ນວ່າບັນດາສະຫາຍຜູ້ແທນກອງປະຊຸມໃຫຍ່ ພ້ອມກັນເຊີດຊູຄວາມຮັບຜິດຊອບປະກອບຄຳຄິດຄຳເຫັນປັບປຸງໃຫ້ສົມບູນ ເພື່ອນຳໄປຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

**( ຂໍຂອບໃຈ )**